# ຄູ່ມືການລ້ຽງແບ້









ຂຽນໂດຍ: ອຈ. ປອ. ນ. ດາວວີ ກອງມະນີລາ

ມີນາ 2022

# ຄູ່ມືການລ້ຽງແບ້

| | |
|---|---|
| ຊື່ໂມດູນ | ການລ້ຽງແບ້ |
| ຊື່ອົງປະກອບການຮຽນ | - ຄວາມຮູ້ພື້ນຖານໃນການລ້ຽງແບ້<br>- ເຕັກນິກການເລືອກສະຖານທີ່ ແລະ ການສ້າງຄອກແບ້<br>- ເຕັກນິກການຄັດເລືອກແບ້ມາລ້ຽງ<br>- ວິທີການລ້ຽງ ແລະ ການຈັດການ<br>- ເຕັກນິກການໃຫ້ອາຫານແບ້<br>- ການຮັກສາສຸຂະພາບແບ້ |
| ອົງກອນອະນຸມັດ | ກະຊວງສຶກສາທິການ ແລະ ກິລາ |


**ຂຽນໂດຍ: ອຈ. ປອ. ນ. ດາວວີ ກອງມະນີລາ**

*ຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່:*

**ຄະນະກະເສດສາດ (ວິທະຍາເຂດນາບົງ)**

**ມະຫາວິທະຍາໄລແຫ່ງຊາດ, ນະຄອນຫຼວງວຽງຈັນ, ສປປ ລາວ**

ເບີໂທ: (856) 21 870048, 020 52365553, 59459635

ອີເມລ: d.kongmanila@nuol.edu.la

ເວັບໄຊທ໌: http://fag.nuol.edu.la

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ກົມອາຊີວະສຶກສາ

ເລກທີ 528 /ອສ

ນະຄອນຫຼວງວຽງຈັນ, ວັນທີ 13 ມີນາ 2022

# ຂໍ້ຕົກລົງ

## ວ່າດ້ວຍການ ຮັບຮອງຄູ່ມື ຝຶກອົບຮົມໄລຍະສັ້ນ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ການສະເໜີຂອງຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ສະບັບເລກທີ 093/ຫກ ລົງວັນທີ່ 01 ກຸມພາ 2022.

### ຫົວໜ້າກົມອາຊີວະສຶກສາ ຕົກລົງ:

ມາດຕາ 01 ອະນຸມັດໃຫ້ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິບັດລາວ ນຳໃຊ້ຄູ່ມືຝຶກອົບຮົມໄລຍະສັ້ນ ແລະ ປຶ້ມຄູ່ມືຄູການຈັດຕັ້ງປະຕິບັດການຮຽນ-ການສອນ ໃນ 15 ສາຂາອາຊີບ ແລະ 03ໂມດູນໝວດຄວາມຮູ້ທົ່ວໄປ ຄື: 1)ອາຊີບລ້ຽງໝູ 2)ອາຊີບລ້ຽງກົບ 3)ອາຊີບລ້ຽງໄກ່ 4)ອາຊີບລ້ຽງງົວທອມ 5)ອາຊີບລ້ຽງປານິນ 6) ອາຊີບລ້ຽງປາດຸກ 7)ອາຊີບລ້ຽງເປັດ 8)ອາຊີບລ້ຽງແບ້ 9)ອາຊີບປູກຜັກກະລໍ່າປີ 10)ອາຊີບປູກຜັກກາດຊອມ 11)ອາຊີບປູກເຫັດນາງຟ້າ 12)ອາຊີບປູກເຫັດເຟືອງ 13)ອາຊີບປູກເຫັດຂອນຂາວ 14)ອາຊີບການຕໍ່າຫູກຍອມສີທຳມະຊາດ(ລະດັບຕົ້ນ) 15)ອາຊີບການຕໍ່າຫູກຍອມສີທຳມະຊາດ(ລະດັບກາງ) 16)ການວາງແຜນທຸລະກິດຂະໜາດນ້ອຍ ແລະ ກາງ 17)ການສື່ສານສຳລັບຜູ້ປະກອບການ ແລະ 18)ທັກສະການສື່ສານສຳລັບຄູຝຶກ;

ມາດຕາ 02 ໃຫ້ຫ້ອງການ ສູນກາງຊາວໜຸ່ມປະຊາຊົນປະຕິບັດລາວ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນຝຶກອົບຮົມຕາມຫຼັກສູດຝຶກອົບຮົມດັ່ງກ່າວ ໃນແຕ່ລະຂັ້ນຕອນ ແລະ ປະເມີນຜົນແຕ່ລະໄລຍະ ພ້ອມທັງອອກໃບຢັ້ງຢືນໃຫ້ຜູ້ທີ່ຜ່ານການຝຶກອົບຮົມຕາມລະບຽບຫຼັກການ;

ມາດຕາ 03 ໃຫ້ຫ້ອງການຊາວໜຸ່ມປະຊາຊົນປະຕິບັດລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ່າງໆ ຈົ່ງພ້ອມກັນປະຕິບັດຂໍ້ຕົກລົງສະບັບນີ້ ຕາມສິດ ແລະ ໜ້າທີ່ຂອງໃຜລາວ;

ມາດຕາ 04 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມ

ກົມອາຊີວະສຶກສາ

ໜູພັນ ອຸດສາ

Nouphanh OUTSA

<u>ບ່ອນສົ່ງ:</u>

- ພະແນກຂອງກົມອາຊີວະສຶກສາ 01 ສະບັບ
- ຫ້ອງການຊາວໜຸ່ມປະຊາຊົນປະຕິບັດລາວ 01 ສະບັບ
- ສະຖານອາຊີວະສຶກສາ ແຕ່ງລະ 01 ສະບັບ
- ພາກສ່ວນກ່ຽວຂ້ອງ ບ່ອນລະ 01 ສະບັບ
- ເກັບມ້ຽນ 02 ສະບັບ

# ສາລະບານ

ໜ້າ

ບົດນໍາ..........5

**I. ຄວາມຮູ້ພື້ນຖານໃນການລ້ຽງແບ້**..........6

- ❖ ລັກສະນະພິເສດ ແລະ ນິດໄສຂອງແບ້..........7
- ❖ ຄວາມເຂົ້າໃຈກ່ຽວກັບນິດໄສຂອງແບ້..........8
- ❖ ບັນຫາ ແລະ ຄວາມສ່ຽງໃນການລ້ຽງແບ້..........8

**II. ເຕັກນິກການເລືອກສະຖານທີ່ ແລະ ການສ້າງຄອກແບ້**..........10

**III. ເຕັກນິກການຄັດເລືອກແບ້ມາລ້ຽງ**..........12

- ❖ ເຮົາຈະຮູ້ໄດ້ແນວໃດວ່າ ແບ້ມີອາຍຸເທົ່າໃດ?..........13

**IV. ວິທີການລ້ຽງ ແລະ ການຈັດການ**..........15

**4.1. ວິທີການຈັດການຝູງແບ້**..........16

- ❖ ເຮົາຈະສັງເກດແນວໃດວ່າແບ້ຖືພາ ຫຼື ບໍ່..........18

**4.2. ວິທີການດູແລຮັກສາແບ້ນ້ອຍຫຼັງຢ່ານົມ**..........19

**4.3. ການດູແລຮັກສາ ແລະ ການຈັດການແບ້ໃນແຕ່ລະໄລຍະ**..........20

**V. ເຕັກນິກການໃຫ້ອາຫານແບ້**..........24

- ❖ ອາຫານເສີມສໍາລັບແບ້..........25

**VI. ການຮັກສາສຸຂະພາບແບ້**..........29

- ❖ ການສັງເກດ ແລະ ຕິດຕາມສຸຂະພາບຂອງແບ້..........30
- ❖ ພະຍາດທີ່ມັກເກີດກັບແບ້..........32
- ❖ ສິ່ງອັນຕະລາຍທີ່ເກີດຈາກກາຝາກພາຍໃນ..........36
- ❖ ກາຝາກພາຍນອກ..........36

# ບົດນຳ

ແບ້ເປັນສັດຊະນິດໜຶ່ງທີ່ມີຂະໜາດນ້ອຍ, ມີຄຸນປະໂຫຍດໃຫ້ຜົນຜະລິດທັງຊີ້ນ, ນົມ ແລະ ຂົນ ເຊິ່ງສາມາດເປັນແຫຼ່ງລາຍຮັບໃຫ້ແກ່ປະຊາຊົນບັນດາເຜົ່າໄດ້. ໃນປະຈຸບັນ, ຄວາມຕ້ອງການບໍລິໂພກຊີ້ນແບ້ທັງພາຍໃນ ແລະ ສົ່ງອອກແມ່ນຍັງມີສູງ. ແບ້ແມ່ນມີຄວາມສຳຄັນ ແລະ ເໝາະສົມສຳລັບຊາວກະສິກອນທີ່ທຸກຍາກ ຫຼື ຜູ້ທີ່ບໍ່ສາມາດລົງທຶນຫຼາຍ ແລະ ຕ້ອງການພື້ນທີ່ໜ້ອຍ, ນອກນັ້ນ ຍັງພົບວ່າແບ້ມີອັດຕາການຂະຫຍາຍພັນສູງ. ແຕ່ຢ່າງໃດກໍ່ຕາມ, ການລ້ຽງແບ້ຂອງໃນໄລຍະທີ່ມາຜ່ານ ໃນ ສປປ ລາວ, ກໍ່ຍັງພົບຫຼາຍບັນຫາ ເປັນຕົ້ນແມ່ນ: ພະຍາດລະບາດ, ການຂາດແຄນອາຫານ ແລະ ການໃຫ້ອາຫານບໍ່ພຽງພໍກັບຄວາມຕ້ອງການ, ການນຳໃຊ້ເຕັກນິກຍັງບໍ່ທັນເໝາະສົມເທົ່າທີ່ຄວນ, ແລະ ອື່ນໆ. ບັນຫາເຫຼົ່ານັ້ນ ໄດ້ສົ່ງຜົນໃຫ້ການລ້ຽງແບ້ໄດ້ຮັບຜົນຜະລິດຕໍ່າ. ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ຊອກຫາວິທີການປັບປຸງການຜະລິດແບ້ໃນ  ສປປ ລາວ ໃຫ້ດີຂຶ້ນຕື່ມ.

ປຶ້ມຄູ່ມື "ເຕັກນິກການລ້ຽງແບ້" ສະບັບນີ້ ໄດ້ຂຽນ ແລະ ຮວບຮວມເພື່ອນຳສະເໜີຄວາມຮູ້, ທັກສະ ແລະ ເຕັກນິກການປະຕິບັດຕົວຈິງຂັ້ນພື້ນຖານ, ສາມາດໃຊ້ເປັນອຸປະກອນໃນການຝຶກອົບຮົມເຕັກນິກການລ້ຽງແບ້ ໃຫ້ແກ່ຊາວກະສິກອນຜູ້ລ້ຽງແບ້, ນັກຮຽນນັກສຶກສາວິຊາຊີບ ຫຼື ຜູ້ທີ່ສົນໃຈທົ່ວໄປ.

ຜູ້ຂຽນໄດ້ຮວບຮວມຈາກຄວາມຮູ້, ຜົນການຄົ້ນຄວ້າ, ແລະ ປະສົບການຕົວຈິງ ພ້ອມທັງບັນດາຂໍ້ມູນທາງວິທະຍາສາດ ແລະ ບັນດາຮູບພາບຕ່າງໆ ທີ່ກ່ຽວຂ້ອງໂດຍມີເປົ້າໝາຍເພື່ອແນະນຳເຕັກນິກພື້ນຖານໃນການແກ້ໄຂບັນຫາ ແລະ ສິ່ງທ້າທາຍທີ່ເກີດຂຶ້ນໃນການລ້ຽງແບ້ຂອງຊາວກະສິກອນ ໃນ ສປປ ລາວ.

ທັນວາ, 2021

**ອຈ. ປອ. ນ. ດາວວີ ກອງມະນີລາ**

| ອົງປະກອບການຮຽນ | ຈຳນວນໜ້າ: 05 |
|---|---|
| **ຊື່ອົງປະກອບການຮຽນທີ 1 :** ຄວາມຮູ້ພື້ນຖານໃນການລ້ຽງແບ້ | |
| **ຊື່ໂມດູນ:** ເຕັກນິກການລ້ຽງແບ້ | ລະຫັດ |
| **ຊື່ອາຊີບ:** ລ້ຽງສັດ | |

**ຈຸດປະສົງ**

ເພື່ອໃຫ້ຜູ້ເຂົ້າຮ່ວມຮູ້ໄດ້ເຖິງຄວາມສຳຄັນ ແລະ ຜົນປະໂຫຍດຂອງການລ້ຽງແບ້, ເຂົ້າໃຈກ່ຽວກັບລັກສະນະພິເສດຂອງການລ້ຽງແບ້ ແລະ ຄວາມສ່ຽງຂອງການລ້ຽງແບ້

**ພາກສະເໜີ**

ຄວາມຮູ້ພື້ນຖານໃນການລ້ຽງແບ້ ຈະລວມມີເນື້ອໃນທີ່ທ່ານຈະໄດ້ຮຽນຮູ້ກ່ຽວກັບຂໍ້ດີ, ບັນຫາ ແລະ ຄວາມສ່ຽງຂອງການລ້ຽງແບ້, ພ້ອມກັນນັ້ນທ່ານຈະໄດ້ເຂົ້າໃຈເຖິງລັກສະນະພິເສດ ແລະ ນິດໄສຂອງແບ້ຫຼາຍຂຶ້ນ.



# I. ຄວາມຮູ້ພື້ນຖານໃນການລ້ຽງແບ້

***ເປັນຫຍັງຈຶ່ງຕ້ອງລ້ຽງແບ້?

ຍ້ອນວ່າ **<u>ແບ້</u>**<u>ມີຂໍ້ດີຫຼາຍໆຢ່າງ</u> ເຊັ່ນ:

- ແບ້ມີຂະໜາດນ້ອຍ, ມີຄຸນປະໂຫຍດໃຫ້ຜົນຜະລິດທັງຊີ້ນ, ນົມ ແລະ ຂົນ ເຊິ່ງສາມາດເປັນແຫຼ່ງລາຍຮັບໃຫ້ແກ່ປະຊາຊົນບັນດາເຜົ່າໄດ້

- ແບ້ຫາກິນເກັ່ງ, ກິນອາຫານໄດ້ຫຼາຍຊະນິດ ແລະ ນຳໃຊ້ພື້ນທີ່ໃນການລ້ຽງໜ້ອຍ ເມື່ອທຽບໃສ່ງົວ ຫຼື ຄວາຍ
- ແບ້ລ້ຽງໃຫຍ່ໄວ ແລະ ໃຫ້ຜົນຜະລິດໄວ
- ແບ້ມີຄວາມສົມບູນພັນສູງ ແບ້ແມ່ສາມາດເກີດລູກແຝດ 2-3 ໂຕ, ໃຊ້ເວລາລ້ຽງລູກສັ້ນ ແລະ ສາມາດຖືພາຄັ້ງ ໃໝ່ໄດ້ໄວອີກ
- ໃຊ້ແຮງງານໜ້ອຍໃນການດູແລແບ້ (ຜູ້ຍິງ ຫຼື ເດັກນ້ອຍ ກໍ່ ສາມາດເບິ່ງແຍງດູແລແບ້ໄດ້)
- ແບ້ສາມາດປັບຕົວເຂົ້າກັບສະພາບແວດລ້ອມໄດ້ດີ, ມີຄວາມທົນທານຕໍ່ກັບສະພາບອາກາດແຫ້ງແລ້ງ ແລະ ຮ້ອນໄດ້ດີ
- ແບ້ສາມາດເປັນອາຫານສຳລັບຄົນເຮົາໃນທຸກໆສາສະໜາ "ບໍ່ມີສາສະໜາໃດຫ້າມບໍລິໂພກຊີ້ນແບ້"



- ແບ້ເປັນສັດຊະນິດໜຶ່ງທີ່ກິນອາຫານໄດ້ຫຼາກຫຼາຍຊະນິດ ລວມທັງຈຳພວກຫຍ້າ, ໃບພືດ & ອື່ນໆ. ດັ່ງນັ້ນ, ຈຶ່ງເຮັດໃຫ້ຄົນສ່ວນຫຼາຍເຂົ້າໃຈວ່າ: **"ແບ້ລ້ຽງງ່າຍ ແລະ ສາມາດກິນໄດ້ທຸກສິ່ງທຸກຢ່າງ"**

## II. ລັກສະນະພິເສດ ແລະ ນິດໄສຂອງແບ້




ຫຼາຍຄົນເຂົ້າໃຈວ່າແບ້ເປັນສັດທີ່ລ້ຽງງ່າຍ ແລະ ກິນໄດ້ທຸກໆຢ່າງ, ນັ້ນກໍ່ຍ້ອນວ່າ ແບ້ເປັນສັດຊະນິດໜຶ່ງທີ່ມີລັກສະນະພິເສດ ແລະ ມີນິດໄສເລືອກກິນຫຼາຍ, ປາກຂອງແບ້ມີຂະໜາດນ້ອຍຈຶ່ງເຮັດໃຫ້ມັນສາມາດເລືອກ ແລະ ກິນພາກສ່ວນນ້ອຍໆຂອງໃບພືດ ແລະ ອາຫານປະເພດຕ່າງໆໄດ້. ພ້ອມກັນນັ້ນ ແບ້ຍັງມີລະບົບການຍ່ອຍທີ່ພິເສດທີ່ສາມາດຍ່ອຍໄດ້ທັງອາຫານຫຍາບ (ປະເພດຫຍ້າ ແລະ ໃບພືດຕ່າງໆ) ແລະ ອາຫານເຂັ້ມຂຸ້ນໄດ້ (ຮຳ, ສາລີ, ມັນຕົ້ນແຫ້ງ ແລະ ອື່ນໆ...ແມ້ແຕ່ ອາຫານບາງຊະນິດທີ່ຄົນເຮົາກິນ).

ແຕ່ໃນທາງກົງກັນຂ້າມ, ນິໄສເລືອກກິນຂອງແບ້ກໍ່ສາມາດເຮັດໃຫ້ພວກມັນພົບກັບບັນຫາຫຼາຍໆຢ່າງທີ່ຕາມມາ ເຊັ່ນ: ການກິນອາຫານເປິເປື້ອນແລ້ວມີເຊື້ອພະຍາດປະປົນມາ ແລ້ວເຮັດໃຫ້ແບ້ເປັນພະຍາດແລ້ວ...ທ້າຍທີ່ສຸດ **"ແບ້ກໍ່ຕາຍໄດ້".** ພ້ອມກັນນັ້ນ ນິໄສຂອງແບ້ຍັງເຮັດໃຫ້ຜູ້ລ້ຽງເຂົ້າໃຈຜິດແລ້ວເອົາພຽງແຕ່ອາຫານຊະນິດດຽວມາໃຫ້ມັນກິນຕະຫຼອດເວລາ,ຖ້າແບ້ໄດ້ກິນແຕ່ອາຫານແບບເດີມໆ ຫຼື ຊະນິດດຽວ ຫຼາຍໆວັນຕິດຕໍ່ກັນກໍ່ສາມາດເຮັດໃຫ້ແບ້ມີບັນຫາເລື່ອງສຸຂະພາບໄດ້.

## III. ຄວາມເຂົ້າໃຈກ່ຽວກັບນິດໄສຂອງແບ້

ເພື່ອຫຼີກລ່ຽງຈາກບັນຫາດັ່ງກ່າວ ພວກເຮົາຄວນເຂົ້າໃຈນິດໄສ ແລະ ພຶດຕິກຳການກິນຂອງແບ້ ດັ່ງລຸ່ມນີ້:



- ແບ້ມັກກິນອາຫານທີ່ຢູ່ສູງ (ສູງພຽງຫົວຂອງມັນ)
- ແບ້ມັກຢູ່ລວມຝູງ ແລະ ກິນອາຫານແບບເປັນຝູງ
- ແບ້ມັກກິນອາຫານ ແລະ ນ້ຳ ທີ່ສະອາດ
- ແບ້ມັກກິນອາຫານຫຼາກຫຼາຍຊະນິດ, ເຊິ່ງແບ້ຈະເລືອກອາຫານທີ່ດີ ແລະ ຈະກິນຫຼາຍຖ້າມັນມັກຫຼາຍ! ແຕ່ຖ້າບໍ່ມັກ, ມັນກໍ່ຈະຊິມເບິ່ງເທົ່ານັ້ນ
- ແບ້ມັກກິນອາຫານປະເພດຕົ້ນພຸ່ມ ຫຼື ໃບໄມ້ປະເພດຕ່າງໆຫຼາຍກວ່າປະເພດຫຍ້າ, ເຟືອງ ແລະ ອື່ນໆ

❖ ແບ້ຈະຮູ້ສຶກເບື່ອອາຫານໄດ້ງ່າຍ ເມື່ອໄດ້ຮັບອາຫານແບບເກົ່າຊ້ຳກັນຫຼາຍໆຄາບ ຫຼື ຫຼາຍໆມື້ຕິດຕໍ່ກັນ

× ແບ້ບໍ່ມັກກິນທີ່ປຽກຊຸ່ມ, ເປື້ອນ ຫຼື ມີກິ່ນເໝັນ

## IV. ບັນຫາ ແລະ ຄວາມສ່ຽງໃນການລ້ຽງແບ້

- ບັນຫາຕົ້ນຕໍຂອງການລ້ຽງແບ້ໃນ ສປປ ລາວ ແມ່ນການ**ໃຫ້ຜົນຜະລິດຕ່ຳ** ແລະ ມັກ**ເກີດພະຍາດລະບາດ ແລະ ແບ້ຕາຍຈຳນວນຫຼວງຫຼາຍ**
  - ແບ້ໄດ້ຮັບອາຫານບໍ່ພຽງພໍກັບຄວາມຕ້ອງການ (ປະລິມານ ແລະ ຄຸນນະພາບ)



- ພື້ນທີ່ໃນການລ້ຽງແບ້ຖືກຈຳກັດລົງ ແລະ ແຮງງານພາຍໃນຄອບຄົວທີ່ຈະດູແລເອົາໃຈໃສ່ແບ້ກໍ່ມີຈຳກັດ
- ລະບົບການລ້ຽງແບບດັ້ງເດີມທີ່ລ້ຽງແບບປ່ອຍໃຫ້ແບ້ຊອກຫາກິນອາຫານເອງ, ໃນບາງຂົງເຂດແມ່ນບໍ່ເໝາະສົມແລ້ວ, ຍ້ອນວ່າ ເນື້ອທີ່ດັ່ງກ່າວໄດ້ນຳໃຊ້ໃນການປູກຝັງເສດຖະກິດ ຫຼື ດຳເນີນການກໍ່ສ້າງ...

- ຄວາມຮູ້, ຄວາມເຂົ້າໃຈ ແລະ ທັກສະໃນການລ້ຽງແບ້, ການດູແລຮັກສາ ແລະ ການຈັດການທີ່ດີຂອງຊາວກະສິກອນກໍ່ຍັງຈຳກັດໃນບາງຂົງເຂດ.ພະຍາດທີ່ມັກເກີດຂຶ້ນກັບແບ້ ເຊັ່ນ: ກາຝາກພາຍນອກ ແລະ ພາຍໃນ, ພະຍາດເຈັບປາກ, ປາກເປື່ອຍລີ້ງເລັບ, ຖອກທ້ອງ, ທ້ອງເບັ່ງ, ປອດອັກເສບ ແລະ ອື່ນໆ.... ຖ້າແບ້ມີແມ່ກາຝາກຈຳນວນຫຼວງຫຼາຍແມ່ນຈະສາມາດເຮັດໃຫ້ມີພະຍາດອື່ນໆແຊກຊ້ອນ ແລ້ວເຮັດໃຫ້ແບ້ຕາຍຈຳນວນຫຼວງຫຼາຍ ໂດຍສະເພາະ ***ແບ້ນ້ອຍທີ່ຫາກໍ່ຢ່ານົມ.***



ຮູບພາບ: ແບ້ນ້ອຍຢ່ານົມມີອາການທ້ອງເບັ່ງ, ບໍ່ສາມາດເຄື່ອນເໜັງດ້ວຍຕົວເອງໄດ້

| ອົງປະກອບການຮຽນ | **ຈຳນວນໜ້າ:** 02 |
|---|---|
| **ຊື່ອົງປະກອບການຮຽນທີ 2 :** ເຕັກນິກການເລືອກສະຖານທີ່ ແລະ ການສ້າງຄອກແບ້ | |
| **ຊື່ໂມດູນ:** ເຕັກນິກການລ້ຽງແບ້ | **ລະຫັດ** |
| **ຊື່ອາຊີບ:** ລ້ຽງສັດ | |

**ຈຸດປະສົງ**

ເພື່ອໃຫ້ຜູ້ເຂົ້າຮ່ວມ ອະທິບາຍໄດ້ ເຕັກນິກໃນການຄັດເລືອກສະຖານທີ່ ແລະ ວິທີການສ້າງຄອກແບ້ຂັ້ນພື້ນຖານຖືກຕ້ອງຕາມຄູ່ມືການລ້ຽງແບ້.

**ພາກສະເໜີ**

ເຕັກນິກການເລືອກສະຖານທີ່ ແລະ ການສ້າງຄອກແບ້ ຈະລວມເອົາເນື້ອໃນທີ່ທ່ານຈະໄດ້ຮຽນຮູ້ກ່ຽວກັບສິ່ງທີ່ຄວນເອົາໃຈໃສ່ໃນການຄັດເລືອກສະຖານທີ່, ທ່ານຈະໄດ້ຮູ້ລັກສະນະຂອງຄອກແບ້ ແລະ ຂໍ້ແນະນຳໃນການສ້າງຄອກແບ້ຂັ້ນພື້ນຖານ

## I. ເຕັກນິກການເລືອກສະຖານທີ່

- ✓ ສະຖານທີ່ລ້ຽງແບ້ ຄວນເປັນບ່ອນສູງ, ໂນນ, ບໍ່ມີນ້ຳເປື້ອນ/ນ້ຳຖ້ວມຂັງ, ແລະ ສິ່ງແວດລ້ອມທີ່ດີ (ມີອາກາດຖ່າຍເທດີ ແລະ ບໍ່ເປິເປື້ອນ) ພື້ນທີ່ທີ່ເໝາະສົມໃນການລ້ຽງແບ້ຄວນເປັນເຂດທີ່ມີອາຫານທຳມະຊາດຫຼາກຫຼາຍຊະນິດ (ມີຕົ້ນໄມ້ພຸ່ມ, ຫຍ້າ ແລະ ພືດອື່ນໆ) ຫຼື ເປັນພື້ນທີ່ໆສາມາດປູກພືດອາຫານສັດໄດ້!
- ✓ ເພື່ອເຮັດໃຫ້ການລ້ຽງມີປະສິດທິຜົນທີ່ດີ, ການກຳນົດຈຳນວນສັດແບ້ໃນພື້ນທີ່ໃດໜຶ່ງຈະຕ້ອງອີງຕາມປະລິມານຂອງອາຫານສຳລັບແບ້ ເປັນຕົ້ນແມ່ນຊະນິດອາຫານທີ່ນຳໃຊ້, ຊະນິດພືດທີ່ມີໃນທຳມະຊາດ ຫຼື ຊະນິດພືດທີ່ປູກສຳລັບລ້ຽງແບ້, ຜົນຜະລິດພືດທີ່ສາມາດເປັນອາຫານແບ້, ຮູບແບບການລ້ຽງແບ້ ແລະ ອື່ນໆ.

## II. ການສ້າງຄອກແບ້

ການສ້າງໂຮງເຮືອນ ແລະ ຄອກແບ້ ເປັນເຕັກນິກໜຶ່ງທີ່ສຳຄັນທີ່ຄວນເອົາໃຈໃສ່ ຍ້ອນວ່າ: ຖ້າຄອກແບ້ບໍ່ຖືກຕ້ອງຕາມຫຼັກການອາດຈະເຮັດໃຫ້ມີຄວາມສ່ຽງ ແລະ ສິ່ງຜົນຕໍ່ສຸຂະພາບແບ້ໄດ້. ສະນັ້ນ, ຂະໜາດຂອງຄອກແບ້ ຄວາມສູງຂອງຄອກ ແລະ ພື້ນຄອກ ຈຶ່ງຕ້ອງໄດ້ເອົາໃຈໃສ່ເປັນພິເສດ. ຂໍ້ແນະນຳຂັ້ນພື້ນຖານສຳລັບການສ້າງຄອກແບ້ມີດັ່ງລຸ່ມນີ້:

- ✓ ຄອກແບ້ຄວນຕັ້ງຢູ່ພື້ນທີ່ສູງ ບໍ່ມີນ້ຳຖ້ວມ
- ✓ ຄວນສ້າງຄອກແບ້ຢູ່ບໍລິເວນທີ່ມີອາກາດປອດໂປ່ງ ແລະ ຖ່າຍເທໄດ້ດີ
- ✓ ຄອກແບ້ບໍ່ຄວນຕັ້ງຢູ່ບໍລິເວນທີ່ຮົ່ມເກີນໄປ, ຄວນຕັ້ງຢູ່ບໍລິເວນທີ່ມີແສງແດດສ່ອງເຖິງໄດ້
- ✓ ແບ້ 1 ໂຕ ຕ້ອງການເນື້ອທີ່ 1 ຕາແມັດ, ຍົກຕົວຢ່າງ: ຖ້າມີແບ້ໜຶ່ງຝູງຈຳນວນ 12 ໂຕ ຄວນມີຄອກເນື້ອທີ່ 12 ຕາແມັດ ຫຼື ຂະໜາດຄອກ 3 ແມັດ x 4 ແມັດ ເປັນຕົ້ນ. ໃນນັ້ນ, ການຂັງແບ້ລວມກັນໃນຄອກໜຶ່ງ, ຄວນຄັດເອົາແບ້ທີ່ມີຂະໜາດດຽວກັນມາຂັງຢູ່ຝູງດຽວກັນ.
- ✓ ພື້ນຄອກແບ້ຄວນສູງຈາກໜ້າດິນພໍສົມຄວນ (ຢ່າງໜ້ອຍ 1.2 ແມັດ)
- ✓ ພື້ນຄອກແບ້ຕ້ອງມີຊ່ອງຫວ່າງໃຫ້**ອາຈົມ (ຂີ້)** ຂອງແບ້ຕົກລົງກ້ອງລ່າງ ແລ້ວເຮັດໃຫ້ພື້ນຄອກແຫ້ງ ແລະ ສະອາດຢູ່ສະເໝີ
- ✓ ຄອກແບ້ຄວນມີຮາງອາຫານທີ່ເໝາະສົມສຳລັບການໃຫ້ອາຫານແບ້
- ✓ ຄອກແບ້ຄວນມີທາງຍ່າງຂຶ້ນ-ລົງ ທີ່ມີຄວາມຄ້ອຍຊັນປະມານ *45 ອົງສາ*

- ✓ ຝາຄອກແບ້ຄວນມີຄວາມສູງຢ່າງໜ້ອຍ 1.5 ແມັດ ເພື່ອປ້ອງກັນບໍ່ໃຫ້ແບ້ໂດດອອກຫຼືປີນຂ້າມອອກໄປໄດ້

**ຕົວຢ່າງ:** ຮູບພາບຂອງຄອກແບ້ທີ່ເໝາະສົມໃນການລ້ຽງແບບຄອບຄົວ (ຈຳນວນໜ້ອຍ) ແລະ ການລ້ຽງແບບເປັນເສດຖະກິດ (ຈຳນວນຫຼາຍໂຕ)



| | |
|---|---|
| **ອົງປະກອບການຮຽນ** | **ຈຳນວນໜ້າ:** 03 |
| **ຊື່ອົງປະກອບການຮຽນທີ 3 :** ເຕັກນິກການຄັດເລືອກແບ້ມາລ້ຽງ | |
| **ຊື່ໂມດູນ:** ເຕັກນິກການລ້ຽງແບ້ | **ລະຫັດ** |
| **ຊື່ອາຊີບ:** ລ້ຽງສັດ | |

**ຈຸດປະສົງ**

ເພື່ອໃຫ້ຜູ້ເຂົ້າຮ່ວມ ອະທິບາຍເຕັກນິກການຄັດເລືອກແບ້ເຂົ້າມາລ້ຽງ, ການກວດອາຍຸຂອງແບ້ ແລະ ການຄັດເລືອກພໍ່ແມ່ພັນແບ້ຂັ້ນພື້ນຖານໄດ້ຖືກຕ້ອງຕາມຫຼັກການທີ່ກຳນົດໄວ້

**ພາກສະເໜີ**

ເຕັກນິກການຄັດເລືອກແບ້ມາລ້ຽງ ຈະລວມມີເນື້ອໃນທີ່ທ່ານຈະໄດ້ຮຽນຮູ້ເຖິງເຕັກນິກຂັ້ນພື້ນຖານໃນການຄັດເລືອກແບ້ເຂົ້າມາລ້ຽງ, ສິ່ງທີ່ຄວນເອົາໃຈໃສ່ການຄັດເລືອກ ແລະ ທ່ານຈະໄດ້ຮຽນຮູ້ກ່ຽວກັບເຕັກນິກການກວດອາຍຸຂອງແບ້

## I. ເຕັກນິກການຄັດເລືອກແບ້ມາລ້ຽງ

ຢາກລ້ຽງແບ້ໃຫ້ປະສົບຜົນສຳເລັດ, ອົກປັດໄຈໜຶ່ງທີ່ສຳຄັນເບື້ອງຕົ້ນກໍ່ແມ່ນການຄັດເລືອກແນວພັນ ຫຼື ພໍ່ພັນ-ແມ່ພັນແບ້ທີ່ດີ, ຖ້າຫາກມີການເລີ່ມຕົ້ນທີ່ດີ ກໍ່ຈະເຮັດໃຫ້ໄດ້ຮັບຜົນຜະລິດທີ່ດີ






***ສິ່ງສຳຄັນທີ່ຄວນຄຳນຶງໃນການຄັດເລືອກແບ້ ຄວນມີດັ່ງນີ້:***

→ ຄວນເລືອກແບ້ທີ່ລ້ຽງງ່າຍ ແລະ ທົນທານຕໍ່ສະພາບແວດລ້ອມ, ສະນັ້ນ ຄວນເລີ່ມຕົ້ນຈາກການລ້ຽງແບ້ພັນພື້ນເມືອງ ຫຼື ແບ້ລູກປະສົມທີ່ໄດ້ຮັບການປັບປຸງໃຫ້ເໝາະສົມກັບສະພາບແວດລ້ອມທ້ອງຖິ່ນ ຈຶ່ງຈະເຮັດໃຫ້ລ້ຽງດູໄດ້ງ່າຍ.

→ **ອາຍຸ ແລະ ຂະໜາດຂອງແບ້ທີ່ພວກເຮົາຄວນນຳມາລ້ຽງໃນໄລຍະເລີ່ມຕົ້ນ**, ພວກເຮົາບໍ່ເລືອກເອົາແບ້ທີ່ອາຍຸອ່ອນເກີນໄປ ຫຼື ແກ່ເກີນໄປມາລ້ຽງ ແຕ່ຄວນເລືອກແບ້ທີ່ຢູ່ໃນໄລຍະຈະເລີນເຕີບໂຕ ແລະ ຢູ່ໃນໄວຈະເລີນພັນ, ເຊິ່ງມີອາຍຸປະມານ 8 ເດືອນ ຂຶ້ນໄປ ແລະ ບໍ່ຄວນມີອາຍຸຫຼາຍກວ່າ 2 ປີ.

- ນ້ຳໜັກຂອງແບ້ພັນພື້ນເມືອງທີ່ຄວນນຳມາລ້ຽງເບື້ອງຕົ້ນຄວນຢູ່ລະຫວ່າງ 18-25 ກິໂລ/ໂຕ.

## II. ເຕັກນິກການກວດອາຍຸແບ້

❑ **ເຮົາຈະຮູ້ໄດ້ແນວໃດວ່າ ແບ້ມີອາຍຸເທົ່າໃດ?**

ພວກເຮົາສາມາດກວດເບິ່ງ**ອາຍຸຂອງແບ້** ໂດຍການ**<u>ສັງເກດເບິ່ງແຂ້ວທີ່ແບ້ມີຢູ່</u>**. ປົກກະຕິແບ້ຈະມີແຂ້ວດ້ານລຸ່ມທັງໝົດ **8 ເຫຼັ້ມ** ເຊິ່ງຈະມີລາຍລະອຽດປົ່ງບອກຂອງມັນ ດັ່ງນີ້:

- ເມື່ອແບ້ເກີດມາໃໝ່ຈົນເຖິງອາຍຸ 1 ປີ, ແບ້ຈະມີແຂ້ວພຽງແຕ່ແຂ້ວນ້ຳນົມເທົ່ານັ້ນ
- ເມື່ອແບ້ມີອາຍຸ 1 ປີ ຂຶ້ນໄປ ພວກມັນຈະມີແຂ້ວແທ້ປົ່ງຂຶ້ນມາແທນແຂ້ວນ້ຳນົມເທື່ອລະຄູ່ ຕັ້ງແຕ່ອາຍຸ 1 ປີ ຫາ 4 ປີ
- ຫຼັງຈາກແບ້ອາຍຸ 4 ປີແລ້ວ ແຂ້ວແທ້ຈະເລີ່ມຫຼົ່ນອອກ

*ການກວດເບິ່ງອາຍຸຂອງແບ້*
*ໂດຍການເບິ່ງແຂ້ວ*



| ອາຍຸຂອງແບ້ | ລັກສະນະຂອງແຂ້ວ |
|---|---|
| ລູກແບ້, ຕ່ຳກວ່າ 1 ປີ | ມີແຂ້ວຕັດ 8 ເຫຼັ້ມ  |
| ແບ້ນ້ອຍ-ກາງ, 1-2 ປີ | ແຂ້ວແທ້ອອກມາ 2 ເຫຼັ້ມທາງໜ້າ  |
| ແບ້ໃຫຍ່, 2-3 ປີ | ແຂ້ວແທ້ມີ 4 ເຫຼັ້ມ  |
| ແບ້ໃຫຍ່, 3-4 ປີ | ແຂ້ວແທ້ມີ 6-8 ເຫຼັ້ມ  |
| ແບ້ໃຫຍ່, 4 ປີ ຂຶ້ນໄປ | ແຂ້ວແທ້ມີ 8 ເຫຼັ້ມ ເລີ່ມຫຼົ່ນ  |
| ແບ້ເຖົ້າ, ຫຼາຍກວ່າ 5 ປີ | ແຂ້ວບາງເຫຼັ້ມເລີ່ມຫຼົ່ນ  |

***<u>ຕົວຢ່າງ:</u>*** *ແບ້ມີອາຍຸ 2-3 ປີ ຕ້ອງມີແຂ້ວລັກສະນະແບບນີ້:*



## III. ການເລືອກພໍ່-ແມ່ພັນ

→ ການເລືອກພໍ່-ແມ່ພັນ: ຄວນຄັດເລືອກພໍ່ພັນທີ່ມີສາຍເລືອດພັນແທ້, ຮູບຮ່າງສູງໃຫຍ່, ນ້ຳໜັກໂຕຫຼາຍທີ່ສຸດໃນຝູງ, ມີຄວາມແຂງແຮງ, ມີຄວາມສົມບູນພັນ ໂດຍຄວນຄັດພໍ່ພັນແບ້ທີ່ເກີດຈາກແມ່ແບ້ທີ່ໃຫ້ລູກແຝດ 2 ໂຕ ຂຶ້ນໄປ ແລະ ພໍ່ພັນແບ້ຄວນມີຄວາມກະຕືລືລົ້ນທີ່ຈະປະສົມພັນກັບແບ້ແມ່ເມື່ອເວລາຂຶ້ນເພດ.

→ ສຳລັບ ການຄັດເລືອກແມ່ພັນ, ນອກຈາກຄັດເລືອກລັກສະນະຄ້າຍຄືກັບແບ້ພໍ່ພັນທີ່ກ່າວມານັ້ນແລ້ວ ຄວນສັງເກດຄວາມສະໝ່ຳສະເໝີຂອງເຕົ້ານົມແບ້ອີກດ້ວຍ.

*ຕົວຢ່າງ: ຮູບພາບຂອງແບ້ທີ່ນຳມາເປັນພໍ່-ແມ່ພັນ*



| ອົງປະກອບການຮຽນ | ຈຳນວນໜ້າ: 9 |
|---|---|
| ຊື່ອົງປະກອບການຮຽນທີ 4 : ວິທີການລ້ຽງ ແລະ ການຈັດການ | |
| ຊື່ໂມດູນ: ເຕັກນິກການລ້ຽງແບ້ | ລະຫັດ |
| ຊື່ອາຊີບ: ລ້ຽງສັດ | |

**ຈຸດປະສົງ**

ເພື່ອໃຫ້ຜູ້ເຂົ້າຮ່ວມ ອະທິບາຍໄດ້ເຖິງວິທີການລ້ຽງ, ການຈັດການຝູງແບ້, ການດູແລຮັກສາແບ້ນ້ອຍເກີດໃໝ່, ການດູແລຮັກສາແບ້ຫຼັງການຢ່ານົມ, ການດູແລຮັກສາ ແລະ ການຈັດການການລ້ຽງແບ້ໃນແຕ່ລະໄລຍະຖືກຕ້ອງຕາມຫຼັກການລ້ຽງແບ້ທີ່ກຳນົດໄວ້.

**ພາກສະເໜີ**

ວິທີການລ້ຽງ ແລະ ການຈັດການ ຈະລວມມີເນື້ອໃນທີ່ທ່ານຈະໄດ້ຮຽນຮູ້ກ່ຽວກັບຮູບແບບການລ້ຽງແບ້ປະເພດຕ່າງໆ, ການຈັດການຝູງສັດລ້ຽງ, ການກວດສອບແບ້ຖືພາ, ສິ່ງທີ່ຄວນເອົາໃຈໃສ່ການລ້ຽງແບ້ນ້ອຍເກີດໃໝ່, ແບ້ນ້ອຍນົມ ແລະ ເຕັກນິກການດູແລເອົາໃຈໃສ່ແບ້ໃນແຕ່ລະໄລຍະ

## I. ວິທີການລ້ຽງ

ວິທີການລ້ຽງແບ້ ທີ່ນິຍົມນຳໃຊ້ມີແບບໃດແດ່?



**ການລ້ຽງແບບຜູກລ່າມ**



**ການລ້ຽງແບບປ່ອຍ**



**ການລ້ຽງແບບຂັງຄອກ**



**ການລ້ຽງແບບປະສົມປະສານກັບການປູກພືດ**

ໂດຍທົ່ວໄປແລ້ວ, ວິທີການລ້ຽງແບ້ທັງ 4 ແບບ ດັ່ງຂ້າງເທິງນັ້ນແມ່ນຊາວກະສິກອນນິຍົມນຳໃຊ້ຢ່າງແຜ່ຫຼາຍ, ໂດຍສະເພາະ ວິທີການລ້ຽງປ່ອຍ ເຊິ່ງວິທີການລ້ຽງແບບນີ້ ຜູ້ລ້ຽງແບ້ມັກຈະປ່ອຍໃຫ້ແບ້ອອກໄປຫາກິນອາຫານໃນເວລາກາງເວັນ ແລ້ວແບ້ກັບຄືນມາຄອກຕອນແລງ.

ພ້ອມກັນນັ້ນ ຍັງມີວິທີການລ້ຽງແບບປະສົມປະສານ ທີ່ນິຍົມນຳໃຊ້ຫຼາຍພໍສົມຄວນໃນປັດຈຸບັນນີ້ ເຊິ່ງການລ້ຽງແບ້ລັກສະນະນີ້ ຜູ້ລ້ຽງຈະລ້ຽງແບ້ໃນພື້ນທີ່ໆການປູກພືດເສດຖະກິດຊະນິດຕ່າງໆ ເຊັ່ນ: ການປູກໄມ້ວິກ, ປູກຢາງພາລາ, ຕົ້ນໄມ້ໃຫ້ໝາກ ແລະ ຕົ້ນໄມ້ຢືນຕົ້ນປະເພດອື່ນໆ. ໂດຍທີ່ວ່າແບ້ຈະສາມາດຫາກິນອາຫານທີ່ເປັນວັດຊະພືດ ຫຼື ພືດອາຫານສັດ ທີ່ປູກປະສົມປະສານໃນພື້ນທີ່ດັ່ງກ່າວ. ແຕ່ຕົ້ນໄມ້ທີ່ປູກຄວນມີຂະໜາດໃຫຍ່ສົມຄວນ ເພື່ອປ້ອງກັນບໍ່ໃຫ້ແບ້ທຳລາຍໄດ້, ການລ້ຽງແບບນີ້ຈະເຮັດໃຫ້ເປັນການສ້າງລາຍຮັບເພີ່ມຂຶ້ນກວ່າການປູກພືດພຽງຢ່າງດຽວ.



## II. ການຈັດການ

### 1. ວິທີການຈັດການຝູງແບ້

ຖ້າຫາກມີແບ້ຝູງໃຫຍ່ມີແບ້ຫຼາຍໆຂະໜາດ, ອາຍຸແຕກຕ່າງກັນ ແລະ ມີທັງເພດຜູ້ & ເພດແມ່ຢູ່ຮ່ວມກັນ, ວິທີການຈັດການ ແລະ ດູແລແບ້ເພດຜູ້ ແລະ ເພດແມ່ແມ່ນປະຕິບັດແບບຄ້າຍຄືກັນ. ແຕ່ເພື່ອເຮັດໃຫ້ການລ້ຽງແບ້ມີປະສິດທິພາບສູງຂຶ້ນ, ຄວນແຍກລ້ຽງ ແລະ ຂັງ ເມື່ອແບ້ເພດຜູ້ ແລະ ເພດແມ່ ເມື່ອແບ້ມີອາຍຸ 3 ເດືອນ ຂຶ້ນໄປ. ວິທີນີ້ສາມາດຫລຸດຄວາມສ່ຽງທີ່ແບ້ຈະປະສົມພັນແບ້ໄວເກີນໄປ (ກ່ອນກຳນົດ). ເພື່ອໃຫ້ໄດ້ປະສິດທິພາບດີ ທັງແບ້ຜູ້ ແລະ ແບ້ແມ່ ຄວນປະສົມພັນຄັ້ງທຳອິດ ເມື່ອພວກມັນມີ**ອາຍຸ 8 ເດືອນ** ຂຶ້ນໄປ.



ທ່ານຄິດວ່າ ຝູງແບ້ ໜຶ່ງໆຄວນມີແບ້ໂຕຜູ້ຈັກ

ແບ້ເພດຜູ້ທີ່ຄວນເລືອກເປັນພໍ່ພັນຕ້ອງມີສຸຂະພາບແຂງແຮງສົມບູນ ແລະ ມີອາຍຸຕັ້ງແຕ່ 8ເດືອນຂຶ້ນໄປ.

## ໂຕ ແລະ ໂຕແມ່ຈັກໂຕ ຈຶ່ງຈະເໝາະສົມ?

ແບ້ຜູ້ທີ່ນຳມາເປັນພໍ່ພັນ 1 ໂຕ ສາມາດຄຸມຝູງກັບແບ້ແມ່ໄດ້ ສູງສຸດເຖິງ 20 ໂຕ

**ໝາຍຄວາມວ່າ:** **ແບ້ຜູ້ 1 ໂຕ ຕໍ່ແບ້ແມ່ 20 ໂຕ.**

ແຕ່ຖ້າແບ້ຜູ້ທີ່ສົມບູນຈະສາມາດປະສົມໄດ້ຫຼາຍຂຶ້ນຕໍ່ວັນ, ແບ້ຜູ້ຄວນມີອາຍຸ 1 ປີ ຂຶ້ນໄປ ແລະ ບໍ່ຄວນເກີນ 4 ປີ.

ແບ້ແມ່ອາຍຸເທົ່າໃດຈຶ່ງສາມາດຖືພາໃຫ້ລູກໄດ້?

ແບ້ແມ່ 8 ເດືອນຂຶ້ນໄປ ຈະເລີ່ມຂຶ້ນເພດ ໂດຍສະແດງອາການຫງຸດຫງິດ, ບໍ່ກິນອາຫານ, ຢືນຊື່ງ ຫຼື ໄລ່ຂີ່ນໂຕມແບ້ໂຕອື່ນໆ. ຮອບວຽນຂຶ້ນເພດຂອງແບ້ແມ່ນທຸກໆ 21 ວັນ ແລະ ໃຊ້ເວລາ 3 ວັນ ໃນແຕ່ລະເທື່ອທີ່ຂຶ້ນເພດ. ເມື່ອແບ້ຂຶ້ນເພດກໍ່ສະແດງວ່າພວກມັນສາມາດປະສົມພັນ ແລະ ຖືພາມີລູກໄດ້

ເມື່ອແບ້ມີອາຍຸ 1 ປີ ຂຶ້ນໄປ ແຕ່ຍັງບໍ່ທັນຖືພາ, ມີຮ່າງກາຍບໍ່ສົມບູນ, ຈ່ອຍ ຫຼື ມັກເຈັບປ່ວຍ ແມ່ນຄວນຄັດອອກຈາກຝູງ

## ➢ ເຮົາຈະສັງເກດແນວໃດວ່າແບ້ຖືພາ ຫຼື ບໍ່?



ແບ້ແມ່ທີ່ປະສົມພັນຕິດແລ້ວ ແບ້ຈະຖືພາ ໂດຍໃຊ້ເວລາປະມານ **150 ວັນ** ຫຼື **5 ເດືອນ** ເຊິ່ງສາມາດສັງເກດລັກສະນະຂອງແບ້ຖືພາດັ່ງນີ້:

→ ບໍ່ມີອາການຂຶ້ນເພດ ແລະ ເຕົ້ານົມເລີ່ມໃຫຍ່ກວ່າປົກກະຕິ

○ ເມື່ອແບ້ຖືພາໃກ້ຈະເກີດ ແບ້ຈະສາມາດອາການດັ່ງລຸ່ມນີ້:

→ ສະແດງອາການຫງຸດຫງິດ, ຕື່ນເຕັ້ນ ແລະ ຮ້ອງສຽງຕ່ຳໆ

→ ບໍລິເວນກະໂພກເບື້ອງຂວາຈະຍຸບເປັນຫຼຸມກ່ອນ, ຈາກນັ້ນ ຈະເຫັນຮອຍຍຸບເປັນຫຼຸມຊັດເຈນຂຶ້ນໃນບໍລິເວນກະໂພກທັງສອງຂ້າງ

→ ອາດຈະມີນ້ຳເມືອກໄຫຼອອກມາຈາກຊ່ອງຄອດເລັກນ້ອຍກ່ອນການເກີດຫຼາຍວັນ, ຈາກນັ້ນ ຈະສັງເກດເຫັນນ້ຳເມືອກເປັນຂຸ້ນໆຂຶ້ນ ແລະ ມີສີເຫຼືອງອ່ອນໆ.

→ ແບ້ອາດຈະຄຸ້ຍເຂ່ຍຫຍ້າ ຫຼື ເຟືອງ ອ້ອມໆຂ້າງຕົວມັນເອງຄ້າຍກັບຈະກຽມເກີດລູກ

→ ແມ່ແບ້ຈະຫງຸດຫງິດຫຼາຍຂຶ້ນທັນທີ, ບິດດຽວນອນ ບິດດຽວລຸກ ແລ້ວນອນລົງແບບຄ່ອຍໆ

→ ເມື່ອແມ່ແບ້ສະແດງອາການດັ່ງກ່າວ ຄວນປ່ອຍແບ້ຢູ່ແບບງຽບໆ ຢ່າໃຫ້ມັນຖືກລົບກວນ

→ ກຽມຜ້າແຫ້ງ ແລະ ດ້າຍເພື່ອຜູກສາຍບື ໃຊ້ມີດໂກນ ແລະ ທິງເຈີໄອໂອດິນໄວ້, ເມື່ອຖົງນ້ຳຄາວປາແຕກແລ້ວ ແບ້ຈະເກີດລູກພາຍໃນ 1 ຊົ່ວໂມງ

○ ແຕ່ຖ້າຫາກ ແມ່ແບ້ເບັ່ງນານເກີນໄປແລ້ວຍັງບໍ່ເກີດ ຄວນຕ້ອງຊ່ວຍແມ່ແບ້ໂດຍໃຫ້ມັນຢືນຂຶ້ນ ເພື່ອໃຫ້ແບ້ເກີດງ່າຍຂຶ້ນ.




➢ ເມື່ອແບ້ນ້ອຍເກີດອອກມາແລ້ວ ຄວນໃຊ້ຜ້າທີ່ກຽມໄວ້ເຊັດໃຫ້ແຫ້ງ ໂດຍເຊັດນ້ຳເມືອກໃນບໍລິເວນດັງອອກໃຫ້ໝົດ ເພື່ອໃຫ້ລູກແບ້ຫາຍໃຈສະດວກຂຶ້ນ.

- ຄວນມັດສາຍບືຫ່າງຈາກທ້ອງປະມານ 2-3 ຊັງຕີແມັດ ແລ້ວຕັດສາຍບື ແລະ ທາທິງເຈີໄອໂອດິນ, ເມື່ອຕັດສາຍບືແລ້ວກໍອຸ້ມແບ້ນ້ອຍໄປນອນທີ່ກະກຽມໄວ້ຕ່າງຫາກ.
- ຖ້າເປັນໄປໄດ້ໃຫ້ເອົາແບ້ນ້ອຍໄປຕາກແດດໜ້ອຍໜຶ່ງ ເພື່ອໃຫ້ແບ້ນ້ອຍໂຕແຫ້ງ ເພື່ອຈະເຮັດໃຫ້ແບ້ນ້ອຍມີຄວາມແຂງແຮງຂຶ້ນ.
  - ປົກກະຕິແລ້ວ ແຮ່ຢູ່ໃນທ້ອງແມ່ແບ້ຈະອອກມາພາຍໃນ 4 ຊົ່ວໂມງ ພາຍຫຼັງຈາກການເກີດ,
  - ແຕ່ຖ້າເກີນ 6 ຊົ່ວໂມງແລ້ວ, ແຮ່ຍັງບໍ່ອອກມາ ຈະຕ້ອງປຶກສາສັດຕະວະແພດເພື່ອແກ້ໄຂບັນຫານີ້.
  - ຫຼັງຈາກແບ້ເກີດລູກແລ້ວ ໃຫ້ເອົານໍ້າສະອາດມາໃຫ້ແມ່ແບ້ກິນ ເພື່ອທົດແທນຂອງແຫຼວໃນຮ່າງກາຍທີ່ສູນເສຍໄປ.

ຄວນໃຫ້ແບ້ນ້ອຍເກີດໃໝ່ ກິນນົມນໍ້າເຫຼືອງນໍາແມ່, ແບ້ນ້ອຍຄວນໄດ້ກິນນົມນ້ອຍຕະຫຼອດເວລາ, ສະນັ້ນ ໄລຍະນີ້ຈຶ່ງຈໍາເປັນຕ້ອງໄດ້ເອົາໃຈໃສ່ໃນການໃຫ້ອາຫານແກ່ແມ່ແບ້ເປັນພິເສດ. ພ້ອມກັນນັ້ນ, ໃນກໍລະນີທີ່ແບ້ເກີດລູກແຝດ 3 ໂຕ, ຜູ້ລ້ຽງຄວນເອົາໃຈໃສ່ເປັນພິເສດໃນການເຮັດໃຫ້ແບ້ນ້ອຍໄດ້ກິນນົມແມ່ຢ່າງພຽງພໍ, ເຊິ່ງອາດຈະຕ້ອງໄດ້ຊື້ນົມຜົງມາແຕ່ງໃຫ້ແບ້ນ້ອຍກິນບາງຄັ້ງຄາວ.

## 2. ວິທີການດູແລຮັກສາແບ້ນ້ອຍຫຼັງຢ່ານົມ





ທາງທີ່ດີຄວນລ້ຽງຢູ່ກັບແມ່ ແລ້ວແຍກອອກຈາກກັນເມື່ອແບ້ນ້ອຍມີອາຍຸ 2-3 ເດືອນ. ເມື່ອແບ້ນ້ອຍມີອາຍຸ 3 ເດືອນຂຶ້ນໄປ, ຜູ້ລ້ຽງສາມາດຄັດເລືອກເອົາແບ້ທີ່ມີຄວາມສົມບູນໄວ້ເປັນພໍ່-ແມ່ພັນໄດ້, ຫຼື ສາມາດຕອນແບ້ຜູ້ໄດ້ໃນຊ່ວງອາຍຸນີ້ໄດ້ເຊັ່ນກັນ.

ພາຍຫຼັງແບ້ນ້ອຍຢ່ານົມ ຄວນຖ່າຍແມ່ທ້ອງໂຕກົມ, ໂຕຕິດ ແລະ ພະຍາດໃບໄມ້ໃນຕັບ, ສັກວັກຊີນປ້ອງກັນພະຍາດປາກເປື່ອຍລີ້ງເລັບ ແລະ ພະຍາດເຕົ້ານົມໂຮມເລືອດ.

ການຖ່າຍແມ່ທ້ອງ ແລະ ສັກວັກຊີນຢ່າງສະໝໍ່າສະເໝີ ເພື່ອໃຫ້ແບ້ມີສຸຂະພາບດີ ແລະ ສາມາດປະສົມພັນໄດ້ເມື່ອອາຍຸ 8 ເດືອນ.

ຄວນເອົາໃຈໃສ່ອາຫານທີ່ແບ້ຢ່ານົມກິນຢ່າງພິເສດ, ບໍ່ຄວນໃຫ້ແບ້ໄລຍະນີ້ກິນອາຫານຈຳພວກພືດຕະກູນຖົ່ວ ຫຼື ໃບມັນຕົ້ນ ຫຼາຍເກີນໄປ ເພາະອາດຈະເຮັດໃຫ້ແບ້ນ້ອຍທ້ອງເບັ່ງໄດ້ງ່າຍ.

ແມ່ແບ້ພາຍຫຼັງເກີດລູກແລ້ວປະມານ 3 ເດືອນ ເມື່ອຂຶ້ນເພດອີກຄັ້ງໃໝ່ ແລ້ວກໍ່ສາມາດປະສົມພັນໄດ້ຄັ້ງໃໝ່ອີກ.



## 3. ການດູແລຮັກສາ ແລະ ການຈັດການແບ້ໃນແຕ່ລະໄລຍະ



### ແບ້ປ່ວຍ ຫຼື ແບ້ບໍ່ສະບາຍ

- ເມື່ອແບ້ບໍ່ສະບາຍ, ຕ້ອງໄດ້ໃຫ້ອາຫານທີ່ດີ ເພື່ອເຮັດໃຫ້ຮ່າງກາຍແບ້ແຂງແຮງຂຶ້ນ
- ແບ້ທີ່ອ່ອນເພຍ ຫຼື ແບ້ປ່ວຍ ຄວນແຍກອອກຈາກຝູງແລ້ວອາຫານຕ່າງຫາກ
- ຄວນມີການຕິດຕາມ ແລະ ໃຫ້ອາຫານທີ່ດີແກ່ແບ້ ດ້ວຍຄວາມລະມັດລະວັງ (ຜູ້ລ້ຽງຕ້ອງໄດ້ຊອກຫາອາຫານໃຫ້ແບ້ກິນ ແລະ ເອົາໃຈໃສ່ເປັນພິເສດໃນການໃຫ້ອາຫານແບ້)

**แบ้น้อยเກີດໃໝ່ ຈົນເຖິງອາຍຸ 3 ເດືອນ**

❑ ແບ້ນ້ອຍເກີດໃຫມ່, ຄວນໃຫ້ກິນນ້ຳນົມເຫຼືອງ ຈາກແມ່ແບ້ ພາຍໃນ 24-48 ຊົ່ວໂມງ ເພື່ອເຮັດໃຫ້ ຮ່າງກາຍແຂງແຮງ ແລະ ມີພູມຄຸ້ມກັນທີ່ດີ



❑ ໃຫ້ແບ້ນ້ອຍສາມາດກິນນົມນ້ຳແມ່ໄດ້ຕະຫຼອດເວລາ

❑ ແບ້ນ້ອຍອາຍຸ 3 ອາທິດຂຶ້ນໄປ, ນອກຈາກການກິນນົມແມ່ແລ້ວ, ແບ້ຄວນເລີ່ມໃຫ້ ອາຫານທີ່ສະອາດປະເພດໃບພືດເຊັ່ນ: ໃບຖົ່ວ, ໃບມັນດ້າງ, ໃບພືດຕ່າງໆທີ່ມີໃນທ້ອງຖິ່ນໂດຍເລີ່ມຈາກໜ້ອຍຫາຫຼາຍ

**ແບ້ທີ່ກຳລັງຈະເລີນເຕີບໂຕ**



➢ ແບ້ອາຍຸ 3 ເດືອນຂຶ້ນໄປ (ຫຼັງຈາກຢ່ານົມ), ຄວນໃຫ້ອາຫານທີ່ສົດ, ສະອາດ ແລະ ມີທາດອາຫານສູງ

➢ ໃຫ້ນ້ຳສະອາດແລະແຮ່ທາດຕະຫຼອດເວລາເພື່ອໃຫ້ແບ້ມີສຸຂະພາບແຂງແຮງ

➢ ໃຫ້ອາຫານພຽງພໍ ເພື່ອເຮັດໃຫ້ແບ້ໃຫຍ່ໄວ, ຄວນໃຫ້ອາຫານເສີມຕອນເຊົ້າ ແລະ ຕອນແລງ ທຸກໆມື້ໃນປະລິມານ 100-200 ກຼາມ/ໂຕ/ວັນ

➢ ອາຫານເສີມໄດ້ແກ່: ໃບຖົ່ວ, ໃບກະຖິນ, ໃບທອງ, ໃບໝາກມີ້,... ນອກນັ້ນຍັງມີອາຫານເສີມປະເພດຫົວມັນຕົ້ນແຫ້ງ, ຫົວມັນດ້າງແຫ້ງ, ຮຳ,...ຫຼື ອາຫານສຳເລັດຮູບ

**ແບ້ພໍ່ພັນ-ແມ່ພັນ**



✓ ພໍ່ພັນແບ້ຄວນໄດ້ຮັບອາຫານທີ່ດີ ແລະ ພຽງພໍ, ຄວນໃຫ້ 3-5 ກິໂລ ຕໍ່ໂຕຕໍ່ມື້

✓ ຄວນແຍກພໍ່ພັນແບ້ອອກຈາກຝູງມື້ລະ 2-3 ຊົ່ວໂມງ ເພື່ອໃຫ້ແບ້ ໄດ້ກິນອາຫານຢ່າງເຕັມທີ່ ແລະ ແບ້ພໍ່ພັນຄວນມີກ້ອນແຮ່ທາດໄວ້ ກິນຢ່າງເຕັມທີ່

***ສຳລັບແມ່ພັນ:*** ຄວນໃຫ້ອາຫານທີ່ດີ ແລະ ພຽງພໍ ສຳລັບແບ້ທີ່ກຳລັງຖືພາ

❖ ຄວນໃຫ້ອາຫານຫຼາຍກວ່າເກົ່າ ເມື່ອແບ້ຖືພາໄດ້ 2 ເດືອນ ຂຶ້ນໄປ, ຄວນອາຫານເສີມຢ່າງໜ້ອຍ 200 ກຼາມ/ໂຕ/ວັນ

❖ ຄວນເອົາໃຈໃສ່ໃຫ້ອາຫານແມ່ຫຼັງຈາກເກີດລູກ ແລະ ລ້ຽງລູກນ້ອຍ ໄລຍະ 2 ເດືອນທຳອິດ ຕ້ອງມີອາຫານຢ່າງພຽງພໍ ແລະ ໃຫ້ແບ້ໄດ້ກິນຢ່າງເຕັມທີ່

**<u>ການດູແລຮັກສາ ແລະ ການໃຫ້ອາຫານແບ້ແມ່ລູກອ່ອນ</u>**



ຄວນດູແລເບິ່ງແຍງແບ້ແມ່ເກີດລູກໃຫມ່ ແລະ ລູກຂອງມັນ ຢ່າງໃກ້ຊິດ ເພື່ອຫຼີກເວັ້ນຈາກອັນຕະລາຍຕໍ່ແມ່ແບ້ ແລະ ແບ້ນ້ອຍ ເຊັ່ນ: ໝາ ແລະ ສັດອື່ນໆ

- ຄວນຂັງໄວ້ໃນຄອກສະອາດ ຢ່າງໜ້ອຍ 1-2 ອາທິດ, ພ້ອມທັງ ອາຫານທີ່ດີເປັນປະໂຫຍດ ແລະ ມີນ້ຳສະອາດ ໃຫ້ແບ້ແມ່ໄດ້ກິນຢູ່ ຕະຫຼອດເວລາ
- ການໃຫ້ແຮ່ທາດແກ່ແບ້ແມ່ທີ່ເກີດໃໝ່ເປັນສິ່ງທີ່ຈຳເປັນທີ່ສຸດ ສະນັ້ນ ຄວນໃຫ້ແຮ່ທາດລວມໃຫ້ແກ່ແບ້ ແຕ່ຖ້າບໍ່ມີແຮ່ ທາດລວມ, ຢາກໜ້ອຍຜູ້ລ້ຽງຄວນເອົາເກືອໃຫ້ແບ້ແມ່ລູກອ່ອນ ໄດ້ເລຍກິນ



| ອົງປະກອບການຮຽນ | ຈຳນວນໜ້າ: 06 |
|---|---|
| ຊື່ອົງປະກອບການຮຽນ 5 : ເຕັກນິກການໃຫ້ອາຫານແບ້ | |
| ຊື່ໂມດູນ: ເຕັກນິກການລ້ຽງແບ້ | ລະຫັດ |
| ຊື່ອາຊີບ: ລ້ຽງສັດ | |

**ຈຸດປະສົງ**

ເພື່ອໃຫ້ຜູ້ເຂົ້າຮ່ວມດຳເນີນການໃຫ້ອາຫານ ແລະ ການເຮັດອາຫານເສີມສຳລັບແບ້ໄດ້ຖືກຕ້ອງຕາມເຕັກນິກການໃຫ້ອາຫານແບ້ທີ່ກຳນົດໃນຄູ່ມື

**ພາກສະເໜີ**

ເຕັກນິກການໃຫ້ອາຫານ ຈະລວມມີເນື້ອໃນທີ່ທ່ານຈະໄດ້ຮຽນຮູ້ກ່ຽວກັບອາຫານ ແລະ ການໃຫ້ອາຫານສຳລັບແບ້ຂັ້ນພື້ນຖານ, ການເຮັດກ້ອນແຮ່ທາດອາຫານເສີມ ແລະ ປະລິມານອາຫານທີ່ຄວນໃຫ້ແບ້ໃນແຕ່ລະໄລຍະ.



# I. ເຕັກນິກການໃຫ້ອາຫານແບ້

*****ແບ້ມີນິໄສທີ່ມັກກິນອາຫານທີ່ຢູ່ສູງກວ່າຫົວຂອງມັນ ການໃຫ້ອາຫານແກ່ແບ້ເມື່ອຢູ່ໃນຄອກ, ຄວນຫ້ອຍໄວ້ສູງ ຫຼື ເອົາອາຫານໃສ່ຮາງອາຫານ**

***ແບ້ມີນິໄສທີ່ມັກກິນອາຫານແບບລວມຝູງ, ສະນັ້ນ ການໃຫ້ອາຫານແບບເປັນຝູງຈະເຮັດໃຫ້ແບ້ກິນອາຫານໄດ້ຫຼາຍຂຶ້ນ

***ແບ້ມີພຶດຕິກຳທີ່ເລືອກກິນອາຫານຫຼາຍຊະນິດ, ສະນັ້ນ ພວກເຮົາຄວນໃຫ້ແບ້ໄດ້ກິນອາຫານຫຼາກຫຼາຍຊະນິດ ເປັນຕົ້ນແມ່ນໃບໄມ້ພຸ່ມ, ໃບພືດຊະນິດຕ່າງໆ, ຫຍ້າ, ສິ່ງເສດເຫຼືອຈາກກະສິກຳ, ອາຫານເສີມ ແລະ ອື່ນໆ

***ແບ້ມີນິໄສທີ່ມັກສະອາດ, ດັ່ງນັ້ນ ຄວນເອົາອາຫານ ແລະ ນ້ຳສະອາດໃຫ້ແບ້ກິນຢູ່ສະເໝີ



**ອາຫານທີ່ດີຂອງແບ້ແມ່ນຫຍັງ?**

- ອາຫານທີ່ດີຄື: ອາຫານທີ່ແບ້ມັກກິນ, ກິນແລ້ວໃຫຍ່ໄວ ແລະ ບໍ່ເປັນອັນຕະລາຍຕໍ່ແບ້!



## II. ອາຫານເສີມສຳລັບແບ້

| | |
|---|---|
| ໃນການລ້ຽງແບ້ແບບປ່ອຍ, ນອກຈາກທີ່ແບ້ຈະຊອກຫາກິນເອງແລ້ວ ການໃຫ້ອາຫານເສີມ ເຊິ່ງເປັນສິ່ງສຳຄັນ ແລະ ຈຳເປັນ ເພື່ອເຮັດໃຫ້ໄດ້ຮັບຜົນຜະລິດທີ່ສູງຂຶ້ນ. ພ້ອມກັນນັ້ນ, ອາຫານເສີມຍັງຈຳເປັນຕໍ່ແບ້ກຳລັງຖືພາ, ເກີດລູກໃຫມ່, ແບ້ທີ່ກຳລັງປ່ວຍ ຫຼື ແບ້ທີ່ອ່ອນເພຍ. | ອາຫານເສີມທີ່ດີ ແລະ ໃຫ້ປະໂຫຍດສູງແກ່ແບ້ໄດ້ແກ່: ໃບພືດຊະນິດຕ່າງໆເຊັ່ນ: ໃບທອງ, ໃບມີ້, ໃບກະທັນ, ໃບກະຖິນ, ໃບມັນຕົ້ນ (ແຫ້ງ), ໃບມອນ, ໃບຕອນ, ໃບຂາມ ແລະ ໃບໄມ້ທີ່ມີໃນທ້ອງຖິ່ນຊະນິດຕ່າງໆ. ນອກນັ້ນ ຍັງມີອາຫານເສີມສຳເລັດຮູບ, ພືດຫົວ ແລະ ພືດທັນຍາຫານ ເຊັ່ນ: ຫົວມັນຕົ້ນແຫ້ງ, ຫົວມັນດ້າງແຫ້ງ, ສາລີ, ຣຳ, ແລະ ອື່ນໆ |

<u>**ອາຫານເສີມປະເພດຕ່າງໆ**</u>





ນອກຈາກບັນດາອາຫານເສີມປະເພດໃບພືດ, ພືດຫົວ, ພືດທັນຍາຫານ ຫຼື ອາຫານສຳເລັດຮູບແລ້ວ, ສິ່ງທີ່ຈຳເປັນອີກຢ່າງໜຶ່ງຄື **ການເສີມແຮ່ທາດ!** ນັ້ນກໍ່ຍ້ອນວ່າ ແບ້ຈະອ່ອນແອ, ຄໍອຽງ, ຍ່າງໝູນເປັນວົງກົມ, ລື້ມລົງນອນສະແດງ, ທ້ອງເບັງ ຫຼື ຖ້າມີອາການຮຸນແຮງແບ້ອາດຈະຕາຍໄດ້, ຖ້າວ່າ ແບ້ບໍ່ໄດ້ຮັບແຮ່ທາດພຽງພໍກັບຄວາມຕ້ອງການຂອງພວກມັນ.

ສະນັ້ນ ຄວນມີແຮ່ທາດແບບກ້ອນໄວ້ໃນຄອກແບ້ ເພື່ອໃຫ້ແບ້ໄດ້ເລຍກິນຕະຫຼອດເວລາ. ລາຍລະອຽດຂອງການເຮັດກ້ອນແຮ່ທາດມີດັ່ງນີ້:

## III. ການຜະລິດອາຫານເສີມ(ເຮັດກ້ອນແຮ່ທາດ)




| ສ່ວນປະສົມ | ສູດ 1 (%) | ສູດ 2 (%) | ສູດ 3 (%) | ສູດ 4 (%) | ສູດ 5 (%) |
|---|---|---|---|---|---|
| ຮຳ [illegible?] | 35 | 27 | 23 | 35 | 24 |
| ດິນດາກ [illegible?] | - | 4.5 | 10 | 10 | 10 |
| [illegible] | 5 | 5 | 5 | 8 | 5 |
| ເກືອ [illegible?] | 3.4 | 5 | 8.5 | 8.5 | 10 |
| ປູນຂາວ | 4 | 3 | 5 | 5 | 5 |
| ຊີມັງ [illegible?] | 10 | 10 | 10 | 10 | 12 |
| [illegible] | 2 | 5 | 3 | 3 | 3.5 |
| ກາກນ້ຳຕານ | 40 | 40 | 35 | 20 | 30 |
| [illegible] | 0.6 | 0.5 | 0.5 | 0.5 | 0.5 |

| ປະລິມານອາຫານທີ່ຄວນໃຫ້ແບ້ໃນແຕ່ລະໄລຍະ | |
|---|---|
| **ອາຍຸ/ໄລຍະ** | **ອາຫານ ແລະ ປະລິມານທີ່ໃຫ້ຕໍ່ວັນ** |
| ເກີດໃໝ່-3 ວັນ | ນໍ້ານົມເຫຼືອງເຕັມທີ່ ຢ່າງໜ້ອຍວັນລະ 3-5 ຄັ້ງ |
| 4 ວັນ -2 ອາທິດ | - ກິນນໍ້ານົມແມ່ຢ່າງເຕັມທີ່ ຫຼື ກໍລະນີທີ່ແຍກລ້ຽງຈາກແມ່ແບ້ ຕ້ອງໃຫ້ນົມສົດປະມານ 0.5-1 ລິດ ຕໍ່ວັນ ແບ່ງອອກເປັນວັນລະ 3 ຄັ້ງ<br>- ວິຕາມິນ+ແຮ່ທາດ ແລະ ນໍ້າ ໂດຍໃຫ້ແບບເຕັມທີ່ |
| 2-16 ອາທິດ | -ກິນນໍ້າແມ່ຢ່າງເຕັມທີ່ ຫຼື ກໍລະນີທີ່ແຍກລ້ຽງຈາກແມ່ແບ້ ຕ້ອງໃຫ້ນົມສົດ ຫຼື ນົມປະສົມ ປະມານ 0.5-1 ລິດ ຕໍ່ວັນ ແບ່ງອອກເປັນວັນລະ 2 ຄັ້ງ<br>- ຫຍ້າແຫ້ງ ເຊິ່ງເປັນຫຍ້າປະສົມຖົ່ວ ຫຼື ຫຍ້າສົດທີ່ມີຄຸນນະພາບດີ, ວິຕາມິນ+ແຮ່ທາດ ແລະ ນໍ້າ ໂດຍໃຫ້ແບບເຕັມທີ່<br>- ອາຫານສໍາເລັດຮູບມີໂປຼຕີນປະມານ 22 ເປີເຊັນ, ໂດຍເລີ່ມຈາກການໃຫ້ປະລິມານໜ້ອຍກ່ອນ ແລ້ວຄ່ອຍໆເພີ່ມປະລິມານຂຶ້ນເລື້ອຍໆ. |
| 4 ເດືອນ-ໃຫ້ລູກ | - ອາຫານຫຍາບ ເຊັ່ນ: ຫຍ້າສົດ, ວິຕາມິນ+ແຮ່ທາດປະສົມ ແລະ ນໍ້າ ໂດຍໃຫ້ແບບເຕັມທີ່<br>- ອາຫານເຂັ້ມຂຸ້ນທີ່ມີໂປຼຕີນລວມ 18-20 ເປີເຊັນ ໂດຍໃຫ້ກິນໄດ້ສູງສຸດເຖິງ 0.5 ກິໂລ/ໂຕ/ວັນ. |
| ແມ່ພັນທີ່ຖືພາ, ແລະ ພໍ່ພັນ | - ອາຫານຫຍາບ, ວິຕາມິນ+ແຮ່ທາດປະສົມ ແລະ ນໍ້າ ໂດຍໃຫ້ແບບເຕັມທີ່<br>- ອາຫານເຂັ້ມຂຸ້ນທີ່ມີໂປຼຕີນລວມ 16-18 ເປີເຊັນ ໂດຍໃຫ້ກິນໄດ້ສູງສຸດເຖິງ 0.2-0.7 ກິໂລ/ໂຕ/ວັນ. |
| ແມ່ພັນໄລຍະໃຫ້ນໍ້ານົມ | - ອາຫານຫຍາບ, ວິຕາມິນ+ແຮ່ທາດປະສົມ ແລະ ນໍ້າ ເຕັມທີ່<br>- ອາຫານເຂັ້ມຂຸ້ນທີ່ມີໂປຼຕີນລວມ 16-18 ເປີເຊັນ ຫຼື ກໍລະນີແບ້ພັນນົມ, ປະລິມານອາຫານທີ່ກິນຈະຂຶ້ນກັບປະລິມານຂອງນໍ້ານົມທີ່ຣີດໄດ້ ເຊິ່ງອາຫານ 0.3-0.5 ກິໂລ/ນໍ້ານົມທີ່ຣີດໄດ້ 1 ລິດ. |

| | |
|---|---|
| **ອົງປະກອບການຮຽນ** | **ຈຳນວນໜ້າ:** 12 |
| **ຊື່ອົງປະກອບການຮຽນທີ 6 :** ການຮັກສາສຸຂະພາບແບ້ | |
| **ຊື່ໂມດູນ:** ເຕັກນິກການລ້ຽງແບ້ | **ລະຫັດ** |
| **ຊື່ອາຊີບ:** ລ້ຽງສັດ | |

**ຈຸດປະສົງ**

ເພື່ອໃຫ້ຜູ້ເຂົ້າຮ່ວມອະທິບາຍກ່ຽວກັບການປ້ອງກັນ ແລະ ປິ່ນປົວພະຍາດທີ່ເກີດກັບແບ້ຂັ້ນພື້ນຖານ ໄດ້ຖືກຕ້ອງຕາມຫຼັກການຮັກສາສຸຂະພາບແບ້ທີ່ກຳນົດໄວ້

**ພາກສະເໜີ**

ການຮັກສາສຸຂະພາບແບ້ ຈະລວມມີເນື້ອໃນທີ່ທ່ານຈະໄດ້ຮຽນຮູ້ຈັກການຕິດຕາມ ແລະ ສັງເກດແບ້ທີ່ມີສຸຂະພາບດີເປັນປົກກະຕິ ແລະ ແບ້ທີ່ເລີ່ມມີການອາການບໍ່ສະບາຍ (ຜິດປົກກະຕິ), ທ່ານຈະໄດ້ຮູ້ຈັກບາງຊະນິດພະຍາດທີ່ມັກເກີດກັບແບ້ ແລະ ສິ່ງທີ່ຄວນເອົາໃຈໃສ່ໃນການປ້ອງກັນ, ພ້ອມທັງເຕັກນິກການປິ່ນປົວຂັ້ນພື້ນຖານ.

## I. ການຮັກສາສຸຂະພາບແບ້



## II. ເຮົາຈະປ້ອງກັນບໍ່ໃຫ້ພະຍາດລະບາດໄດ້ແນວໃດ?

ການປ້ອງກັນ ແລະ ຄວບຄຸມພະຍາດລະບາດ ສາມາດປະຕິບັດໄດ້ ດັ່ງນີ້ :

1) ການຮັກສາຄວາມສະອາດຂອງໂຮງເຮືອນ ແລະ ຄອກສັດ
2) ນຳໃຊ້ອາຫານ ແລະ ໃຫ້ອາຫານທີ່ຖືກຕ້ອງ, ພຽງພໍກັບຄວາມຕ້ອງການຂອງສັດ
3) ນຳໃຊ້ວິທີການລ້ຽງທີ່ຖືກຕ້ອງ ແລະ ເໝາະສົມ
4) ກໍລະນີມີແບ້ເຈັບປ່ວຍ ຫຼື ແບ້ບໍ່ສະບາຍ, **ຫ້າມບໍ່**ໃຫ້ຢູ່ຮ່ວມກັບແບ້ທີ່ແຂງແຮງ ເພາະຈະເຮັດໃຫ້ແບ້ທີ່ແຂງແຮງ ສາມາດຕິດຕໍ່ພະຍາດຈາກແບ້ທີ່ປ່ວຍໄດ້
5) **ແຍກສັດເຈັບອອກຈາກຝູງ,** ພ້ອມທັງເອົາໃຈໃສ່ສັດເຈັບປິ່ນປົວແບ້ທີ່ເຈັບປ່ວຍຈົນໃຫ້ຫາຍດີຈຶ່ງຍ້າຍເຂົ້າລວມຝູງ
6) ຕິດຕາມແບ້ຢ່າງ**ເປັນ**ປົກກະຕິ, ຖ້າມີແບ້ຊື້ເຂົ້າມາໃຫມ່ຕ້ອງໄດ້ຕິດຕາມເປັນພິເສດ ເພື່ອໃຫ້ແນ່ໃຈວ່າບໍ່ເປັນພະຍາດ ແລ້ວຈຶ່ງປ່ອຍເຂົ້າຝູງ

**ການສັງເກດ ແລະ ຕິດຕາມສຸຂະພາບຂອງແບ້**

| ອາຍຸຂອງແບ້ | ແບ້ທີ່ແຂງແຮງ/ ປົກກະຕິ | ແບ້ທີ່ບໍ່ແຂງແຮງ/ ຜິດປົກກະຕິ |
|---|---|---|
| **ແບ້ເກີດໃໝ່**  | ເຄື່ອນໄຫວດີ<br>ສາມາດຢືນໄດ້ 30-60 ນາທີ<br>ການຫາຍໃຈປົກກະຕິ | ບໍ່ເຄື່ອນໄຫວ ແລະ ບໍ່ກິນນົມ<br>ອ່ອນແອ ແລະ ສະແດງອາການໜາວ |
| **ແບ້ອາຍຸ 1 ອາທິດ(ອາທິດທຳອິດ)** | ເຄື່ອນໄຫວດີ<br>ກິນປົກກະຕິ<br>ແລ່ນຫັນ | ມັກນອນສະແດງອາການໜາວ ແລະ ສັ່ນ |

| | | |
|---|---|---|
| **ລູກແບ້**<br>**ອາຍຸ> 1 ອາທິດ**<br> | ຢູ່ລວມຝູງກິນອາຫານດີ<br>ແລ່ນຫັນດີຂົນລຽບງາມການຂັບ<br>ຖ່າຍປົກກະຕິການເຄື່ອນໄຫວດີ | ຢູ່ໂດດດ່ຽວ (ແຍກຝູງ)<br>ເຫງົາອາຈົມ<br>(ຂີ້)ແຫຼວ<br>ເຄື່ອນໄຫວຊ້າ<br> |

| | |
|---|---|
| **ແບ້ທີ່ໃຫຍ່ເຕັມທີ່**<br><br>**<u>ອາການປົກກະຕິ</u>**<br>ແຂງແຮງດີ<br>ມັກແລ່ນເລາະຫາກິນເອງໄດ້ດີ<br>ຢູ່ເປັນຝູງ<br>ຂົນລຽບ, ສະອາດ<br>ຕາສະອາດ<br>ຫາງຕັ້ງ<br>ດັງ ແລະ ໃບໜ້າປົກກະຕິ | **<u>ອາການຜິດປົກກະຕິ</u>**<br>ກິນອາຫານບໍ່ດີ<br>ບໍ່ມັກຢູ່ເປັນຝູງ/ແຍກອອກຈາກຝູງ<br>ຫູພັບລົງ<br>ຫາງຢ່ອນລົງລຸ່ມ<br>ດັງ, ປາກ ແລະ ຕາແຫ້ງ<br>ຫາຍໃຈຊ້າ<br> |

ການຢູ່ລວມຝູງຂອງແບ້



# III. ພະຍາດທີ່ມັກເກີດກັບແບ້

**ພະຍາດປາກເປື່ອຍລີ້ງເລັບ**





ແບ້ຈະມີອາການຊຶມເຫງົາ, ນ້ຳລາຍໄຫຼຍືດອອກມາ, ບໍ່ກິນອາຫານ, ບໍລິເວນປາກ ແລະ ແກ້ມບວມແດງ, ມີເມັດຕຸ່ມໃສໆເປັນບາດແຜຢູ່ບໍລິເວນເລັບຕີນ ແລະ ຕີນ, ແບ້ຈະຍ່າງຂາຫ່າງຍ້ານການເຈັບປວດ. ຖ້າເກີດການແຊກຊ້ອນ, ຈະເຮັດໃຫ້ບໍລິເວນບາດແຜ
ມີໜອງ, ເປັນຕຸ່ມໂພງແຕກອອກ ແລ້ວເຮັດໃຫ້ນານເຊົາ
**ຖ້າມີອາການຊ້ຳເຊື້ອ, ອາດຈະເກີດອາການເລືອດເປັນພິດແລ້ວເຮັດໃຫ້ແບ້ຕາຍໄດ້.**



→ ແຕ່ຖ້າບໍ່ມີພະຍາດອື່ນໆເຂົ້າມາແຊກຊ້ອນ ພະຍາດນີ້ກໍ່ຈະຫາຍດີໄດ້ເອງພາຍໃນ 21 ວັນ.

***ການປິ່ນປົວ:*** ທຳຄວາມສະອາດບໍລິເວນບາດແຜດ້ວຍນ້ຳເກືອ, ນ້ຳສົ້ມ ຫຼື ນ້ຳຝາດ, ແລ້ວໃຊ້ຢາສະເປສີມ້ວງ ທາບໍລິເວນບາດແຜທີ່ປາກ ແລະ ຕີນ ມື້ລະຄັ້ງ ແລະ ສັກຢາຕ້ານເຊື້ອ ເພື່ອປ້ອງກັນພະຍາດແຊກຊ້ອນ, ພ້ອມກັນນັ້ນຄວນຂໍຄຳແນະນຳຈາກສັດຕະວະແພດ.

***ການປ້ອງກັນ:*** 1. ສັກວັກຊີນປ້ອງກັນພະຍາດປາກເປື່ອຍລີ້ງເລັບ ປີລະຄັ້ງ

2. ກັກກັນແບ້ທີ່ເອົາເຂົ້າມາໃໝ່ ເປັນເວລາ 14 ວັນ ຈົນແນ່ໃຈວ່າແບ້ບໍ່ເປັນພະຍາດນີ້ ແລ້ວຄອຍປ່ອຍເຂົ້າຝູງ.



***ຂໍ້ຄວນລະວັງ:*** ພະຍາດນີ້ເປັນພະຍາດທີ່ມັກລະບາດໃນຊ່ວງປ່ຽນລະດູ ແລະ ສ້າງຜົນເສຍຫາຍຫຼາຍໃຫ້ແກ່ຊາວກະສິກອນຜູ້ລ້ຽງແບ້ເປັນຕົ້ນແມ່ນ:

ຖ້າແບ້ຕິດພະຍາດແຊກຊ້ອນ ແລ້ວຈະເຮັດໃຫ້ແບ້ຕາຍໄດ້.
ແບ້ທີ່ຖືພາອາດຈະແທ້ງລູກ (ລຸລູກ) ໄດ້, ເນື່ອງຈາກເປັນພະຍາດທີ່ເກີດຈາກເຊື້ອໄວຣັດ ຈຶ່ງບໍ່ສາມາດປິ່ນປົວໄດ້ໂດຍກົງ.

**<u>ພະຍາດປອດບວມ</u>**

ແບ້ທີ່ອ່ອນແອ ຫຼື ແບ້ທີ່ບໍ່ເຄີຍຂ້າແມ່ທ້ອງ ມັກຈະເກີດພະຍາດປອດບວມ

ພະຍາດນີ້ມັກເກີດຂຶ້ນ ແລະ ແຜ່ເຊື້ອໄດ້ໄວໃນໄລຍະລະດູຝົນ ຍ້ອນແບ້ໄດ້ຮັບເຊື້ອພະຍາດຈາກນໍ້າ, ອາຫານ, ເຊື້ອພະຍາດໃນອາກາດ, ການຢູ່ລວມກັນຂອງຝູງແບ້ທີ່ມີເຊື້ອພະຍາດນີ້ (ຕິດຕໍ່ທາງລະບົບຫາຍໃຈ).



- ແບ້ທີ່ເປັນພະຍາດນີ້ຈະສະແດງອາການອອກຄື: ເປັນໄຂ້, ມີນ້ຳມູກ, ມີອາການຫອບ, ຫາຍໃຈສຽງດັງ, ໄອ. ຖ້າມີອາການຊຳເຮື້ອ ແບ້ຈະກາຍເປັນແບ້ຂອດ (ບໍ່ຂະຫຍາຍໂຕ) ແລະ ອ່ອນແອ.
- ແບ້ອາດຈະຕາຍເຖິງ 60-90% ໂດຍສະເພາະ ແບ້ນ້ອຍຫຼັງຈາກຢ່ານົມຈະຕາຍຫຼາຍທີ່ສຸດ.

***<u>ການປິ່ນປົວ ແລະ ການປ້ອງກັນ:</u>***

ສັກຢາຕ້ານເຊື້ອຈຳພວກເປນີຊີລີນ, ອອກຊີເຕຕຼາໄຊຄຣີນ, ຄໍແຣມເຟນີໂຄນ ຊະນິດໃດໜຶ່ງກໍ່ໄດ້, ໃຫ້ສັກ 3-5 ວັນ ຕິດຕໍ່ກັນ ເພື່ອປິ່ນປົວແບ້ທີ່ເປັນພະຍາດນີ້ ພ້ອມທັງປຶກສາສັດຕະວະແພດເພື່ອຊ່ວຍໃນການປິ່ນປົວ.

ການປ້ອງກັນພະຍາດນີ້: ທຳຄວາມສະອາດບໍລິເວນໂຮງເຮືອນ, ຄອກແບ້ ແລະ ບໍລິເວນທີ່ແບ້ອາໄສຢູ່, ພື້ນຄອກໃຫ້ແຫ້ງ, ຢ່າໃຫ້ຝົນສາດຖືກ ຫຼື ລົມພັດຕະຫຼອດເວລາ. ສະນັ້ນ ໂຮງເຮືອນ-ຄອກແບ້ຄວນຍົກພື້ນໃຫ້ສູງປະມານ 1-1.5 ແມັດ.

ຖ້າມີແບ້ປ່ວຍຄວນແຍກອອກໄປຂັງໄວ້ຕ່າງຫາກ ເພື່ອປິ່ນປົວຈົນຫາຍດີແລ້ວຄ່ອຍເອົາມາປ່ອຍໃສ່ຝູງເດີມ. ຄວນຂ້າແມ່ທ້ອງໃຫ້ແບ້ເປັນປະຈຳທຸກໆ 4-6 ອາທິດ ເພື່ອໃຫ້ແບ້ແຂງແຮງ ແລະ ຄວນດູແລແບ້ຫຼັງຈາກຢ່ານົມເປັນພິເສດ ໂດຍໃຫ້ອາຫານເສີມທີ່ມີຄຸນນະພາບດີ.

**<u>ພະຍາດທ້ອງເບັ່ງ</u>**



ພະຍາດນີ້ເກີດຈາກຫຼາຍສາເຫດ ເປັນຕົ້ນແມ່ນ: ການປ່ຽນອາຫານກະທັນຫັນ, ການກິນຫຍ້າອ່ອນ, ພືດຕະກູນຖົ່ວ ຫຼື ອາຫານເຂັ້ມຂຸ້ນຫຼາຍເກີນໄປ ຫຼື ກິນອາຫານເປັນພິດ ເຊິ່ງສ່ວນຫຼາຍມັກເກີດໃນຊ່ວງຕົ້ນລະດູຝົນ, ນອກຈາກນັ້ນ ຍັງອາດຈະເກີດຈາກຄວາມຄຽດເນື່ອງຈາກສະພາບແວດລ້ອມມີການປ່ຽນແປງໄວອີກດ້ວຍ.

ພະຍາດທ້ອງເບັ່ງເກີດຂຶ້ນເມື່ອມີການຜະລິດອາຍແກັດອອກມາໄວເກີນໄປເຮັດໃຫ້ລະບາຍອອກບໍ່ທັນຈຶ່ງເຮັດໃຫ້ທໍ່ທາງເດີນອາຫານອຸດຕັນ ຈຶ່ງເຮັດໃຫ້ກະເພາະເບັ່ງໃຫຍ່ຂຶ້ນ ແລ້ວໄປບີບຮັດຫົວໃຈ ແລະ ປອດ ສະນັ້ນ ຜູ້ລ້ຽງຈະສາມາດສັງເກດໄດ້ວ່າຫົວໃຈແບ້ຈະເຕັ້ນໄວຜິດປົກກະຕິ, ແບ້ຫາຍໃຈລໍາບາກ, ໂຕແຂງ, ມີສຽງກັດແຂ້ວ, ຢືນຊຶງເຮັດຂາຈ່າງອອກ, ແບ້ຈະລົ້ມລົງເຮັດຂາແຂງຊີ້ຂຶ້ນ ແລ້ວອີກບໍ່ເທົ່າໃດຊົ່ວໂມງ (2-3 ຊົ່ວໂມງ) ສັດກໍ່ຈະຕາຍ.

**<u>ການປິ່ນປົວ:</u>**

- ໃນກໍລະນີບໍ່ທັນຮຸນແຮງ ໃຫ້ໄລ່ ຫຼື ກະຕຸ້ນໃຫ້ແບ້ລຸກຂຶ້ນຍ່າງ, ແລ່ນອ້ອມໄປມາ ຫຼື ຈູງແບ້ໃຫ້ຍ່າງໄປ-ມາ
- ແຍ່ທໍ່ເຂົ້າທາງປາກ ແລະ ຈົກເອົາອາຈົມອອກ ພ້ອມທັງເອົາປະເພດນໍ້າມັນພືດ ຫຼື ນໍ້າອັດລົມໃຫ້ແບ້ກິນ ເຊິ່ງອາດຈະຊ່ວຍໃຫ້ລະບາຍແກ໊ດຢູ່ໃນທ້ອງແບ້ໄດ້ງ່າຍຂຶ້ນ



-ໃນກໍລະນີເປັນຮຸນແຮງ, ຕ້ອງໄດ້ເຈາະສ້ວງບາງຂ້າງຊ້າຍ ຫຼື ຂ້າງກະເພາະໜັກ ດ້ວຍເຂັມໃຫຍ່ ຫຼື ເຂັມໂຕຣກາ

-ສັກ ຫຼື ຮ່າຍຢາຕ້ານເຊື້ອໃສ່ບໍລິເວນທີ່ແທງ

**<u>ການປ້ອງກັນ:</u>**

-ໃນຊ່ວງປ່ຽນລະດູການ (ລະດູແລ້ງຕໍ່ລະດູຝົນ) ຫຼື ໃນຊ່ວງລະດູທີ່ຝົນຕົກໃໝ່ບໍ່ຄວນປ່ອຍໃຫ້ສັດກິນຫຍ້າຂຽວປົ່ງໃໝ່ຫຼາຍເກີນໄປ ຫຼື ກ່ອນປ່ອຍອອກທົ່ງຄວນໃຫ້ແບ້ໄດ້ກິນຫຍ້າແຫ້ງ ຫຼື ເຟືອງແຫ້ງກ່ອນຈຶ່ງປ່ອຍອອກໄປກິນຫຍ້າຂຽວ

-ບໍ່ປ່ອຍແບ້ເຊົ້າເກີນໄປໂດຍສະເພາະໃນຊ່ວງລະດູຝົນ ແລະ ລະດູໜາວ

-ບໍ່ໃຫ້ສັດກິນອາຫານຂຸ້ນຫຼາຍເກີນໄປ,

-ບໍ່ໃຫ້ກິນອາຫານເປັນພິດ, ອາຫານເສຍຄຸນ, ບໍ່ປ່ຽນອາຫານກະທັນຫັນ

**ພະຍາດຖອກທ້ອງ**



ພະຍາດຖອກທ້ອງເປັນພະຍາດໜຶ່ງທີ່ອັນຕະລາຍ ແລະ ສົ່ງຜົນເສຍຫາຍຕໍ່ການລ້ຽງແບ້ ເຊິ່ງມີຫຼາຍສາເຫດທີ່ເຮັດໃຫ້ແບ້ຖອກທ້ອງ ເປັນຕົ້ນແມ່ນ: ການປ່ຽນອາຫານ ຈາກອາຫານແຫ້ງເປັນອາຫານສົດ ຫຼື ການກິນອາຫານທີ່ປຽກຊຸ່ມຫຼາຍເກີນໄປ, ການກິນອາຫານທີ່ມີຄຸນນະພາບຕໍ່າຕິດຕໍ່ກັນຫຼາຍໆມື້, ການກິນອາຫານທີ່ເປັນພິດ ຫຼື ມີສິ່ງປົນເປື້ອນມານຳ.

ນອກຈາກນັ້ນ ຍັງພົບວ່າ ແມ່ກາຝາກພາຍໃນບາງໂຕ ສາມາດເປັນສາເຫດເຮັດໃຫ້ແບ້ຖອກທ້ອງໄດ້ ໂດຍສະເພາະ ໃນແບ້ນ້ອຍ

ພະຍາດຖອກທ້ອງຈະເຮັດໃຫ້ແບ້ອ່ອນເພຍ, ສູນເສຍນ້ຳ ແລະ ແຮ່ທາດໃນຮ່າງກາຍໄວທີ່ສຸດ ແລ້ວເມື່ອແບ້ມີອາການຂາດນ້ຳໃນຮ່າງກາຍຈະເຮັດໃຫ້ແບ້ຕາຍໄດ້.

**ວິທີການປິ່ນປົວ**

ຄວນກະກຽມນ້ຳລະລາຍແຮ່ທາດ ເພື່ອໃຫ້ກິນທົດແທນນ້ຳທີ່ສູນເສຍໄປ ໂດຍການປະສົມ ນ້ຳຕານ 6 ບ່ວງຊາ ແລະ ເກືອ ເຄິ່ງບ່ວງຊາ ປະສົມກັບນ້ຳສະອາດ 1 ລິດ, ໃຫ້ແບ້ກິນຢ່າງໜ້ອຍ 500 ມິລີລິດ ຕໍ່ວັນ

ຄວນເອົາອາຫານປະເພດໃບໄມ້ທີ່ລົດຊາດຂົມ-ຝາດໃຫ້ແບ້ກິນ

ຖ້າແບ້ມີອາການໄຂ້ສູງ, ຕ້ອງໄດ້ສັກຢາຕ້ານເຊື້ອເພື່ອປິ່ນປົວຕື່ມ.

ນອກຈາກນັ້ນ, ຍັງມີພະຍາດແທ້ງຕິດຕໍ່ທີ່ມັກເກີດຂຶ້ນກັບແບ້ ເຊິ່ງພະຍາດນີ້ເປັນສາເຫດເຮັດໃຫ້ແບ້ແທ້ງລູກ (ລຸລູກ) ເມື່ອແບ້ຖືພາປະມານ 6-8 ອາທິດ. ພະຍາດນີ້ສາມາດຕິດຕໍ່ໃສ່ຄົນໄດ້! ອາການຂອງແບ້ທີ່ເປັນພະຍາດນີ້ຈະສັງເກດໄດ້ຍາກ, ຕ້ອງໄດ້ກວດເລືອດເທົ່ານັ້ນ. ດັ່ງນັ້ນ, ຈຶ່ງຄວນມີການປ້ອງກັນແມ່ນດີທີ່ສຸດ ໂດຍການກວດເລືອດແບ້ທຸກໆປີ (ປີລະຄັ້ງ) ແລະ ຕ້ອງໄດ້ທຳລາຍແບ້ທີ່ເປັນພະຍາດນີ້ຖິ້ມ.

ວິທີການປ້ອງກັນທີ່ດີທີ່ສຸດ ຄືການທຳລາຍແບ້ທີ່ເປັນພະຍາດ ແລະ ຄວນເບິ່ງປະຫວັດຂອງແບ້ກ່ອນນຳເອົາມາລ້ຽງ, ບໍ່ຄວນເລືອກເອົາແບ້ທີ່ມີພໍ່-ແມ່ເຄີຍມີປະຫວັດເປັນພະຍາດນີ້ມາກ່ອນ.

**ກາຝາກພາຍໃນ ແລະ ພາຍນອກ**

- ກາຝາກ (ແມ່ທ້ອງ) ມີຜົນກະທົບຕໍ່ຜົນຜະລິດແບ້ທັງທາງກົງ ແລະ ທາງອ້ອມ
- ກາຝາກພາຍໃນເປັນບັນຫາຫຼາຍກວ່າກາຝາກພາຍນອກ
- ຖ້າແບ້ມີກາຝາກພາຍໃນຈຳນວນຫຼວງຫຼາຍຈະເຮັດໃຫ້ມີພະຍາດອື່ນໆເຂົ້າມາແຊກຊ້ອນຂັ້ນຮຸນແຮງແລ້ວເຮັດໃຫ້ແບ້ຕາຍໄດ້.
- ແຕ່ຖ້າມີປະລິມານໜ້ອຍ ຈະເຮັດໃຫ້ຜົນຜະລິດຫລຸດລົງ, ຮ່າງກາຍອ່ອນເພຍ ແລະ ເປັນພະຍາດອື່ນໆໄດ້ງ່າຍ
- ກາຝາກພາຍໃນທີ່ພົບເຫັນໃນແບ້ປະກອບມີຈຳພວກແມ່ທ້ອງໂຕກົມ, ແມ່ທ້ອງໂຕຕິດ ແລະ ແມ່ທ້ອງໂຕແປ ເປັນຕົ້ນ.

## ສິ່ງອັນຕະລາຍທີ່ເກີດຈາກກາຝາກພາຍໃນ

- *<u>ແມ່ທ້ອງເສັ້ນດ້າຍ:</u>* ສິ່ງອັນຕະລາຍກໍ່ຄືແມ່ທ້ອງຊະນິດນີ້ຈະດູດກິນເລືອດແບ້ ເຮັດໃຫ້ແບ້ເກີດພະຍາດເລືອດຈາງ ແລະ ຖ້າມີອາການຮຸນແຮງ ແບ້ຈະມີອາການບວມນໍ້າກ້ອງຄາງ, ພື້ນທ້ອງ ແລະ ຮ່າງກາຍບໍ່ຂະ ຫຍາຍ (ຢຸດການຈະເລີນເຕີບໂຕ), ນໍ້າໜັກຫຼຸດລົງ, ຖອກທ້ອງ ຫຼື ທ້ອງເບັ່ງ, ຮ່າງກາຍອ່ອນເພຍ, ຄວາມຕ້ານທານຕໍ່ພະຍາດອື່ນໆຕໍ່າລົງ ແລະ ຕາຍໄດ້.
  - ອາການໃນແບ້ນ້ອຍຈະເປັນແບບກະທັນຫັນ ເພາະການເສຍເລືອດຢ່າງໄວວາ ໂດຍບໍ່ສະແດງອອກຂອງອາການເລືອດຈາງ.
  - ມີອາການຂອງລໍາໄສ້ນ້ອຍອັກເສບ, ແບ້ຈະຖ່າຍອອກເປັນມູກແຫຼວ, ຂົນຫຍາບກະດ້າງ, ຖອກທ້ອງ ບາງຄັ້ງມີເລືອດອອກມາກັບອາຈົມສັດ, ນໍ້າໜັກຫຼຸດລົງ, ຈ່ອຍຜອມແຫ້ງ ແລ້ວຕາຍ.



- *<u>ແມ່ທ້ອງຕົວຕືດ:</u>* ມັກເກີດກັບແບ້ທີ່ມີອາຍຸ 6-8 ອາທິດ ຫຼື ແບ້ນ້ອຍທີ່ມີອາຍຸຕໍ່າກວ່າ 6 ເດືອນ ຈະຕິດແມ່ພະຍາດນີ້ໄດ້ງ່າຍ ແລະ ມີອາການຮຸນແຮງຫຼາຍກວ່າແບ້ໃຫຍ່.
  - ຖ້າແບ້ມີແມ່ພະຍາດຈໍາພວກນີ້ປະລິມານໜ້ອຍອາດຈະບໍ່ສະແດງອາການ ແຕ່ຖ້າມີຫຼາຍ ຈະເຮັດໃຫ້ແບ້ຕາຍໄດ້.
- *<u>ແມ່ພະຍາດໃບໄມ້ໃນຕັບ:</u>* ແບ້ຈະບໍ່ຢາກເຄື່ອນໄຫວ, ຫາຍໃຈລໍາບາກ, ສະແດງອາການເຈັບປວດໃນບໍລິເວນທີ່ຖືກສໍາພັດ ແລະ ແມ່ພະຍາດນີ້ເຮັດໃຫ້ການຍ່ອຍອາຫານບໍ່ໄດ້ດີ ແລ້ວສົ່ງຜົນຕໍ່ການຈະເລີນເຕີບໂຕຂອງແບ້ ແລະ ຜົນຜະລິດຫຼຸດລົງ.
- *<u>ເຊື້ອບິດ:</u>* ແບ້ຈະສະແດງອາການເບື່ອອາຫານ, ສຸຂະພາບບໍ່ສົມບູນ, ທ້ອງວ່າງ, ອາຈົມມີກິ່ນເໝັນຫຼາຍ, ແບ້ຈະອ່ອນເພຍ ແລະ ຖ້າບໍ່ຮັກສາຈະເຮັດໃຫ້ແບ້ຕາຍໄດ້ ເຊິ່ງເຫັນວ່າອັດຕາການຕາຍຂອງແບ້ຈາກແມ່ພະຍາດນີ້ຂ້ອນຂ້າງສູງ.
  - ການປ້ອງກັນ ຄວນແຍກແບ້ທີ່ເປັນພະຍາດອອກຈາກຝູງ, ທໍາຄວາມສະອາດຮາງອາຫານ, ບໍລິເວນຄອກ ແລະ ພື້ນຄອກ.
  - ກວດວິໄຈຫາພະຍາດໂດຍສັງເກດເບິ່ງອາການວ່າ ແບ້ຈະເບື່ອອາຫານ, ຈ່ອຍຜອມລົງຢ່າງໄວວາ, ເຫງົາ, ຂົນຫຍົ່ງ, ຖອກທ້ອງ, ບວມນໍ້າໃຕ້ຄາງ ແລະ ພື້ນທ້ອງ ເຊິ່ງຄວນກວດທຸກໆປີ ຢ່າງໜ້ອຍປີລະ 1 ຄັ້ງ.

## ກາຝາກພາຍນອກ

*ອາການຂອງພະຍາດກາຝາກພາຍນອກ ມີດັ່ງນີ້:*



- ຜິວໜັງບໍ່ກ້ຽງ, ຂົນຫຍົ່ງ, ຫຼື ຂັ້ນຮຸນແຮງແມ່ນຂົນຫຼົ່ນ (ບໍ່ມີຂົນໃນບາງບໍລິເວນ)
- ເກີດບາດແຜຕາມຜິວໜັງ ແລະ ອະໄວຍະວະຕ່າງໆ
- ເຍື່ອເມືອກຈືດຊີດໃນບໍລິເວນຕາ, ອື່ນໆ
- ແບ້ນໍ້າໜັກຫຼຸດ, ຈ່ອຍຜອມ, ອ່ອນເພຍເກີດ ແລະ ເຈັບປ່ວຍໄດ້ງ່າຍ.

*ກາຝາກພາຍນອກສາມາດເກີດຈາກຫຼາຍສາເຫດ ເປັນຕົ້ນແມ່ນ:*

- ເກີດຈາກເຊື້ອພະຍາດຊະນິດຕ່າງໆ
- ເກີດຈາກສະພາບແວດລ້ອມມີການປ່ຽນແປງ
- ເກີດຈາກການຈັດການກັບສິ່ງແວດລ້ອມບໍ່ເໝາະສົມ
- ຄວາມເປິເປື້ອນ ແລະ ສົກກະປົກໃນບ່ອນທີ່ຢູ່ອາໄສຂອງແບ້

*ການປ້ອງກັນແບ້ບໍ່ໃຫ້ມີກາຝາກພາຍນອກ*

- ປະຕິບັດການສຸຂະອະນາໄມຢ່າງເຄັ່ງຄັດ
- ຮັກສາສະພາບແວດລ້ອມໃຫ້ສະອາດ

- ມີການວາງແຜນຈັດການກັບສິ່ງແວດລ້ອມຢ່າງເໝາະສົມ
- ຮັກສາຄວາມສະອາດບໍລິເວນທີ່ຢູ່ອາໄສຂອງສັດ
- ແຍກສັດທີ່ພົບເຫັນມີພະຍາດອອກຈາກຝູງ
- ໃຊ້ຢາຂ້າແມ່ກາຝາກພາຍນອກຊະນິດຕ່າງໆ

## <u>ຂໍ້ແນະນຳການປ້ອງກັນ ແລະ ຄວບຄຸມກາຝາກໃນແບ້</u>

1. ຂ້າແມ່ທ້ອງ (ກາຝາກ) ເປັນປະຈຳຕາມຫຼັກການທີ່ກຳນົດໄວ້, ໃນທຸກໆ 4-6 ອາທິດ. ຢາທີ່ນຳໃຊ້ໃນການຂ້າແມ່ທ້ອງປະກອບດ້ວຍ:

a. ຢາຂ້າແມ່ທ້ອງໂຕກົມ ເຊັ່ນ: ອັນເບັນດາໂຊນ, ໄທອາເບັນດາໂຊນ, ໄພແຣນເທນ, ເລວາມມີຊອນ,...

b. ຢາຂ້າແມ່ທ້ອງໂຕຕືດ ເຊັ່ນ: ນິໂຄຊາໄມ, ເມເບັນດາໂຊນ,...

c. ຢາຖ່າຍແມ່ພະຍາດໃບໄມ້ໃນຕັບ: ຣາຟອກຊາໄນ, ໄນໂຕໄຊນິດ,...

d. ຢາຂ້າເຊື້ອບິດ ເຊັ່ນ: ໂທຫຼາຊູລິດ, ຊັນຟາຄະວິນອົກຊາລິນ,... ຫຼື ຖ້າແບ້ມີທັງແມ່ພະຍາດພາຍໃນ ແລະ ເຊື້ອບິດຮ່ວມກັນ ອາດຈະຕ້ອງໃຊ້ຢາທັງ 3 ຊະນິດ ແລະ ຄວນຂ້າແມ່ທ້ອງທຸກໆ 4-6 ອາທິດ.

e. ສຳລັບ ແມ່ທ້ອງໂຕກົມ ແມ່ນຄວນເລີ່ມຖ່າຍພະຍາດຄັ້ງທຳອິດເມື່ອອາຍຸ 8 ອາທິດ.

f. ທຳຄວາມສະອາດໂຮງເຮືອນແບ້ຢ່າງສະໝ່ຳສະເໝີ, ພື້ນໂຮງເຮືອນແບ້ຕ້ອງມີປ່ອງ ເພື່ອໃຫ້ຂີ້ແບ້ຕົກລົງໄປຂ້າງລຸ່ມ ແລະ ຕ້ອງໄດ້ລ້ອມໄວ້ ເພື່ອບໍ່ໃຫ້ແບ້ເຂົ້າໄປກ້ອງຄອກ, ຖ້າບໍ່ດັ່ງນັ້ນ ຈະເຮັດໃຫ້ແບ້ຕິດເຊື້ອພະຍາດຈາກຂີ້ແບ້ໄດ້.

2. ຂີ້ແບ້ ແລະ ສິ່ງເປິເປື້ອນອື່ນໆຈາກແບ້ທີ່ມີພະຍາດຕ້ອງຝັງ ຫຼື ເຜົາ ທຳລາຍຖິ້ມໃຫ້ໝົດ.

3. ນຳໃຊ້ລະບົບແປງປູກຫຍ້າ (ພືດອາຫານສັດ) ໝູນວຽນ ໂດຍແບ່ງແປງຫຍ້າອອກເປັນແປງຍ່ອຍ ແລະ ແຕ່ລະແປງຕ້ອງອ້ອມຮົ້ວກັ້ນໄວ້ ແລ້ວປ່ອຍໃຫ້ແບ້ໄປກິນຫຍ້າແຕ່ລະແປງຍ່ອຍໃນໄລຍະ 2 ອາທິດ.

a. ຫຼັງຈາກນັ້ນ ນຳເອົາແບ້ໄປລ້ຽງໃນແປງອື່ນໆຕໍ່ໄປ ໂດຍຕ້ອງຈັດການແປງຫຍ້າທີ່ແບ້ໄປກິນແລ້ວ ໂດຍການຕັດຫຍ້າໃຫ້ສັ້ນລົງທີ່ສຸດ ຫຼື ໃຫ້ແສງແດດສ່ອງເຖິງພື້ນດິນ ເພື່ອໃຫ້ໄຂ່ ແລະ ຕົວອ່ອນຂອງແມ່ພະຍາດຕາຍ ແລະ ຫຍ້າຈະເລີນເຕີບໂຕງອກງາມໄວ ເພື່ອສາມາດນຳເອົາມາກິນຫຍ້າໃນແປງນັ້ນອີກໄດ້ໄວຂຶ້ນ,

b. ຄວນມີການໝູນວຽນພື້ນທີ່ຕະຫຼອດ ຫຼື ໃນກໍລະນີທີ່ມີພື້ນທີ່ຈຳກັດສຳລັບປ່ອຍແບ້ ຄວນນຳໃຊ້ການຜູກລ່າມແບ້ ແຕ່ບໍ່ຄວນຜູກໄວ້ບ່ອນເກົ່າ.

4. ທຳລາຍຕົວນຳເຊື້ອຂອງແມ່ພະຍາດ ເຊັ່ນ: ໄຣ ແລະ ຫອຍນ້ຳຈືດ

5. ບໍ່ຄວນປ່ອຍແບ້ໄປແປງຫຍ້າທີ່ມີຄວາມປຽກຊຸ່ມ ແລະ ພື້ນດິນປຽກ ເພາະຈະເຮັດໃຫ້ແບ້ສາມາດຕິດເຊື້ອພະຍາດໄດ້ງ່າຍຈາກຕົວອ່ອນທີ່ອາໄສຢູ່ແປງຫຍ້າ (ທົ່ງຫຍ້າ) ທີ່ມີຄວາມຊຸ່ມຊື່ນຫຼາຍ.

***<u>ສິ່ງທີ່ຄວນຄຳນຶງຢູ່ສະເໝີກໍ່ຄື:</u>***

***"ແບ້ທີ່ກິນອາຫານດີ ແລະ***

***ມີການຈັດການທີ່ຖືກຕ້ອງ***

***ຈະມີສຸຂະພາບແຂງແຮງ"***

- *ຖ້າແບ້ມີອາການຄຽດ, ອ່ອນເພຍ, ໄດ້ຮັບອາຫານບໍ່ພຽງພໍ ແລະ ຢູ່ໃນສະພາບແວດລ້ອມທີ່ບໍ່ສະອາດຈະເຮັດໃຫ້ແບ້ເກີດພະຍາດໄວທີ່ສຸດ!*

- **ເມື່ອພົບເຫັນອາການຜິດປົກກະຕິຂອງແບ້ ໃຫ້ກວດເບິ່ງຄືນວ່າເກີດຈາກບັນຫາຂອງອາຫານບໍ?, ຖ້າແບ້ເປັນພະຍາດຍ້ອນອາຫານທີ່ກິນ, ຜູ້ລ້ຽງຕ້ອງປ່ຽນອາຫານໃຫ້ແບ້ຢ່າງຮີບດ່ວນ**

ໃນກໍລະນີແບ້ເກີດພະຍາດ ໃຫ້ຕິດຕໍ່ຫາສັດຕະວະແພດບ້ານ/ເມືອງ ເພື່ອມາຊ່ວຍປິ່ນປົວໂດຍດ່ວນ!

ສະໜັບສະໜູນໂດຍ:

With financial support from the Russian Federation

ພິມທີ່: ໂຮງພິມດີບຸກ

ພິມຄັ້ງທີ: 1

ພິມເພື່ອ: ນຳໃຊ້ເຂົ້າໃນການຝຶກອົບຮົມ